# ສັງຄົມລາວ

# SANGKHOMLAO



ເດັກລາວເຜົ່າຕ່າງໆ ແຕ້ມໂດຍ ຍາເອື້ອຍ Halinka Luangpraseut

ປີທີ ໗ ສບັບທີ ໗໐ ເດືອນ ກຸມພາ ພ.ສ. ໒໕໓໔
FEBRUARY 1991

9012

# ຖ້າທ່ານຄິດຈະ



- ຊື້ເຮືອນ
- ຂາຍບ້ານ
- ຊື້ຮ້ານຄ້າຕ່າງໆ
- ຊື້ເຮືອນໃຫ້ຄົນເຊົ່າ
- ຕ້ອງການເຊົ່າເຮືອນ
- ຫລື ດ້ານການເງິນ

## ບໍ່ມີບັນຫາ → ເສິກ ເອກກະສອນ

ຍິນດີໃຫ້ຄຳແນະນຳ ກ່ຽວກັບການ ຊື້, ຂາຍ, ເຊົ່າ, ແລະ ດ້ານການເງິນ ໂດຍບໍ່ຄິດຄ່າຣາຄາແຕ່ຢ່າງໃດ.

ເພື່ອໃຫ້ໝົດຄວາມສົງໃສ !!

ບາງທີທ່ານອາດຈະເປັນເຈົ້າຂອງເຮືອນ
ຫລືຮ້ານຄ້າ ບ່ອນທີ່ທ່ານຄິດວ່າ ເປັນໄປບໍ່ໄດ້
ຢ່າງບໍ່ຄາດຝັນ. ຖ້າຫາກທ່ານໄດ້ຕິດຕໍ່ກັບຜູ້

ຊຳນິ ຊຳນານ ໃນການຊື້ຂາຍ.

ເພື່ອຣາຍຣະອຽດ ເຊີນຕິດຕໍ່

**SEUK EKASONE**
**REALTOR**
Notary Public
(703)941-7700(O)
(703)578-1892(H)

**East Group Realty**
5015-A Backlick Road, Annandale, VA 22003

# Far East Travel

# ຟາອີສຕ໌ທ່ອງທ່ຽວ

0014/91

8212 S.E.STARK ST. ( 82nd & STARK )
PORTLAND, OREGON 97216
Tel. (503) 252-8888

ບໍລິການ - ປີ້ຍົນ ພາຍໃນ ແລະຕ່າງປະເທດ
ນຳທ່ຽວ, ຖ່າຍຮູບເຮັດບັດຜ່ານແດນ
ຂໍວີຊາ ແລະ ເຮັດຄຳຮ້ອງຂໍເຂົ້າປະເທດຄືນ.

ເຮົາຍັງ - ຂາຍປີ້ຍົນ - ບໍລິການ ຕິດຕໍ່ໂຮງແຮມ ໃນ
ບາງກອກ - ບໍລິການປີ້ຍົນຈາກວຽງຈັນ ເຖິງ
ສະຫະຣັດອະເມຣິກາ.

ເຮົາຍັງບໍລິການປີ້ຍົນໃນຣາຄາພິເສດຂອງທຸກໆສາຍການບິນ
ບໍ່ວ່າທ່ານຈະເດີນທາງໄປປະເທດໃດເມືອງໃດ ໂຕຢ່າງ :
PARIS, SIDNEY, HONGKONG, BANGKOK ,
TAIPEI , VIENTIANE ແລະ ປະເທດອື່ນໆ....

**TOURS**

**RENO**

**LAS VEGAS**

**HAWAII**

**MEXICO**

**ECT.........**

**ຣາຄາ ຖືກທີ່ສຸດ**

ເພື່ອຄວາມກະຈ່າງແຈ້ງ

ຕິດຕໍ່ສອບຖາມ ທ່ານປຸ້ຍ ແລະ ສົມລີ ບີ ໄດ້ທຸກໂອກາດ
ໂທຣະສັບ ( 503 ) 252-8888 ລັບລອງທ່ານຈະບໍ່ຜິດຫວັງ

## ສາຣະບານ


| ເຣື່ອງ | ໜ້າ |
|---|---|
| ຂ່າວທີ່ໜ້າສົນໃຈ | ໕ |
| ກົດໝາຍລາວ | ໑໒ |
| ປະເພນີສູ່ຂວັນ | ໑໔ |
| ຄວາມຫລັງຂອງຂ້າພເຈົ້າ ທ້າວອຸ່ນ | ໑໖ |
| ເມືອງລາວໃນປັດຈຸບັນ | ໑໘ |
| ສົນທະນາພຸທສາສນາ | ໒໐ |
| ຊຸມນຸມກາບກອນ ແລະ ສຸພາສິດ | ໒໒ |
| ຂ່າວສັງຄົມ ຜສົມການເມືອງ | ໒໔ |
| ເພງລາວ | ໒໖ |



*ຄະນະຈັດທຳ ວາຣະສານ ສັງຄົມລາວ*

ບັນນາທິການ.............ສີທະນົມໄຊ ສຸຣັດທະ
ກອງບັນນາທິການ..........ສົມຈິດ ອຸທັຍທິບ
ຈເຣີນ ວໍຣະຈິດ
ຕາງໜ້າເຂດວໍຊິງຕັນ ດີຊີ ບົວສອນ ສີຂັດຕະນະ
ເຂດຣັຖ ອີລີນອຍ..........ສຸນທອນ ຣັດຕະນະ
ເຂດ ແຊນດິເອໂກ.........ບຸນທົງ ຄົມມະຣາຊ

ຝ່າຍທຸຣະການ............ຕ່ຽນ ສຸຣັດທະ
ອຸໄລວັນ ຄຳວົງສາ


## ສຳນັກງານ


SANGKHOMLAO
5090 NW. 173rd Place
Portland, Oregon 97229

Telephone :(503)645-9867


## ບົດບັນນາທິການ

*ປີ ໑໙໙໐ ຫາກໍຈະຜ່ານພົ້ນໄປ ທາງ ສຄລ. ຂໍສລຸບຜົນງານໃນເມືອງລາວຂອງສົກປີ ໑໙໙໐ ໃຫ້ທ່ານຜູ້ອ່ານຟັງພຽງຫຍໍ້ໆ ດັ່ງຕໍ່ໄປນີ້ : ໑.ດ້ານການເມືອງພາຍໃນປະເທດ ບໍ່ຄ່ອຍດີປານໃດ ມີການຈັບກຸມ ເຈົ້າໜ້າທີ່ຊັ້ນສູງຫລາຍທ່ານ ເຊັ່ນຈັບທ່ານທອງສຸກ ສາຍສັງຄີ, ທ່ານລັສມີ ຄຳຜຸຍ ,ທ່ານຄຳແຝງ ແລະອີກຫລາຍໆທ່ານ. ຣັຖບານໃຫ້ສິດເດັດຂາດແຕ່ພັກດຽວ ເຖິງວ່າຈະມີຫລາຍອົງການຈັດຕັ້ງທີ່ຢູ່ນອກ ຫລືຢູ່ໃນປະເທດສແດງຄວາມບໍ່ພໍໃຈ ບໍ່ເຫັນດີນຳປານໃດກໍຕາມ ໂຕຢ່າງ ນັກສຶກສາລາວຢູ່ປະເທດສັງຄົມນິຍົມຢຸໂຣບໄດ້ປະທ້ວງຣັຖບານ ເປັນຕົ້ນ.*

*໒. ດ້ານການເມືອງຕ່າງປະເທດ ແມ່ນດີສົມຄວນ ຄືໄດ້ປະຕິບັດນະໂຍບາຍ " ປອດສັດຕູ "ຢ່າງນົ້ມນວນເກືອບຢາກວ່າ ບໍ່ມີປະເທດໃດໃນໂລກ ເຮັດໄດ້ຄື ລາວ ຄືທ່ານຜູ້ອ່ານຮູ້ດີນັ້ນແລ້ວ- ລາວ ເປັນເພື່ອນທີ່ດີກັບໄທຍ, ວຽດນາມ, ຂເມນ, ພະມ້າ, ຈີນແດງ, ໃຕ້ຫວັນ, ໂຊວຽດ, ສະຫະຣັຖ, ຝຣັ່ງ, ຍີ່ປຸ່ນ, ອອສເຕຼເລັຽ ແລະອີກຫລາຍປະເທດ. ມີຕ່າງປະເທດມາຊ່ອຍລາວຢ່າງມະຫາສານ ຈົນມີໜັງສືພິມຕ່າງປະເທດຫລາຍສບັບຂຽນຂ່າວວ່າ "ລາວນີ້ໄດ້ຮັບການຊ່ອຍເຫລືອຕໍ່ຫົວຄົນຫລາຍທີ່ສຸດໃນໂລກໂດຍສເພາະຢູ່ວຽງຈັນ ເຕັມໄປດ້ວຍຜູ້ຊ່ຽວຊານຕ່າງປະເທດ.*

*໓. ດ້ານເສຖກິດ, ການຄອງຊີບດີຂຶ້ນ ຖານະການເງິນຄືຣາຍໄດ້ ຣາຍຈ່າຍຂອງຣັຖຄ່ອຍດີຂຶ້ນ ການແລກປ່ຽນສິນຄ້າຕ່າງປະເທດກໍຄ່ອຍມີການສົມດຸນກັນ, ເງິນກີບກໍຢູ່ໂຕຄືຢູ່ໃນຣະວ່າງ ໗໐໐ ກີບ ຕໍ່ ໑ ດອລລາ ມາໄດ້ເກືອບ ໒ ປີແລ້ວ. ເງິນເດືອນຂອງຣັຖການ ຍັງຕ່ຳຫລາຍ ແຕ່ກໍດີຂຶ້ນແດ່ ເພາະໄດ້ຮັບທຸກເດືອນແລ້ວ. ດ້ານສັງຄົມປາກົດວ່າຊຸດໂຊມລົງຫລາຍ ໂດຍສເພາະ ມີໂສເພນີຫລາຍຫລາຍຂຶ້ນ ບາຣ໌ໄຟແດງໄຟຂຽວຫລາຍຂຶ້ນ ແຕ່ດ້ານໂຮງໝໍ ໂຮງຮຽນກໍມີຫລາຍຂຶ້ນເຊັ່ນກັນ ແຕ່ຢາປົວພຍາດນັ້ນແມ່ນຍັງຂາດເຂີນຫລາຍຢູ່, ຣັຖບານມີນະໂຍບາຍໃຫ້ເອກກະຊົນເປີດໂຮງຮຽນໂຮງໝໍຂຶ້ນ...ດ້ານຖນົນຫົນທາງໃນໂຕເມືອງ ແມ່ນຊຸດໂຊມຫລາຍ ແຕ່ຢູ່ຕາມຊົນນະບົດດີຂຶ້ນ ຕາມຂ້າງທາງກໍມີໄຟຟ້າ ຕາມບ້ານເຮືອນກໍມີນ້ຳປະປາເຂົ້າເຖິງແລ້ວ...ຖ້າເບິ່ງວ່າໃນປີ ໑໙໙໑ ນີ້ຈະມີຫຍັງປ່ຽນແປງອີກແດ່...???????????????????*

# ຂ່າວ ທີ່ໜ້າສົນໃຈ

<u>ກັມມະການທະຫານລາວ-ໄທຍ ປະຊຸມກັນ</u>

ການປະຊຸມປະຈຳເດືອນຂອງຄະນະກັມມະການຮ່ວມລາວ-ໄທຍ ໃນເດືອນມະກະຣາ ໑໙໙໑ ໄດ້ຈັດຂຶ້ນທີ່ບ້ານເໝືອງແພ ເມືອງບໍ່ແຕນ ແຂວງໄຊຍະບຸຣີ ປະເທດລາວ ໂດຍແມ່ນຝ່າຍລາວເປັນເຈົ້າພາບ ໃນວັນທີ ໓ ມະກະຣາ ທີ່ຜ່ານມາ.

ຜູ້ຕາງໜ້າຄະນະຝ່າຍລາວໄດ້ແກ່ທ່ານພັນເອກພິມມະຈັກ ສຸດທິສານ ຫົວໜ້າຄະນະກັມມະການຮ່ວມຝ່າຍລາວ ແລະຝ່າຍໄທຍ ນຳໂດຍທ່ານພິນຕຣີ ວິໂຣດ ວະຊິຣາວັດ ຫົວໜ້າຄະນະກັມມະການຮ່ວມຝ່າຍໄທຍ . ນອກນັ້ນກໍມີເຈົ້າໜ້າທີ່ທ້ອງຖິ່ນທັງສອງຝ່າຍເຂົ້າຮ່ວມນຳ.

ທັງສອງຝ່າຍຕ່າງກໍຣາຍງານຜົນຄືບໜ້າ ກ່ຽວກັບສະພາບການໃນເຂດແດນຂອງເດືອນທີ່ຜ່ານມາ ແລະໄດ້ໂອ້ໂລມກັນກ່ຽວກັບການຈັດຕັ້ງການຕິດຕໍ່ຣະຫວ່າງປະຊາຊົນລາວ ແລະປະຊາຊົນໄທຍທີ່ອາສັຍໃນຂົງເຂດນັ້ນ.

ທ່ານພັນເອກພິມມະຈັກ ສຸດທິສານ ໄດ້ໃຫ້ສົມພາດແກ່ນັກຂ່າວຫລັງຈາກກອງປະຊຸມ ວ່າ ຝ່າຍລາວໄດ້ແຈ້ງໃຫ້ຝ່າຍໄທຍຊາບວ່າ ມື້ວັນທີ ໑໗ ທັນວາ ໑໙໙໐ ທີ່ຜ່ານມາ ໄດ້ມີຕຳຣວດຊາຍແດນຂອງໄທຍ ອາວຸດຄົບມື ຈຳນວນ ໗ ຄົນ ໄດ້ລ່ວງລ້ຳເຂົ້າໄປໃນດິນແດນລາວ ເຖິງ ໗ ກິໂລແມດ ໃນເຂດແຂວງຈຳປາສັກ, ແລະສເນີໃຫ້ຝ່າຍໄທຍ ຈົ່ງໄດ້ຣະງັບໂຄງການກໍ່ສ້າງໃດໆໃນເຂດຊາຍແດນນັ້ນ ຊຶ່ງເສັ້ນຊາຍແດນຍັງບໍ່ໄດ້ຕົກລົງກັນ ແຈ່ມແຈ້ງເທື່ອ ທັງນີ້ເພື່ອຫລີກເວັ້ນຈາກການພິພາດກັນ ແລະເປັນການທຳລາຍສະພາບສິ່ງແວດລ້ອມໃນຂົງເຂດນັ້ນ . ທາງຝ່າຍລາວ ຍັງໄດ້ຮຽກຮ້ອງໃຫ້ຝ່າຍໄທຍ ໃຫ້ຫລີກເວັ້ນການສົ່ງເສີມພວກກຳລັງຕໍ່ຕ້ານຣັຖບານລາວ ແລະທ່ານກ່າວວ່າທາງຝ່າຍໄທຍກໍໄດ້ສແດງວ່າ ພ້ອມທີ່ຈະໃຫ້ຄວາມຮ່ວມມືໃນການແກ້ໄຂບັນຫານີ້ແລ້ວ.

(ຈາກ FBIS 9 JAN 91)

<u>ໂຊວຽດ ຊ່ອຍຈັດຕັ້ງສະຖານີໂທຣະທັດ</u>

ຂ່າວສານປະເທດລາວ ຂ່າວວ່າ ຫວ່າງບໍ່ນານມານີ້ ທີ່ແຂວງສວັນນະເຂດ ໄດ້ມີການຕົກລົງກັນກັບເຈົ້າໜ້າທີ່ໂຊວຽດ ກ່ຽວກັບການຮັບເອົາເຄື່ອງຮັບສົ່ງຄື້ນໂທຣະທັດຈາກດາວທຽມຂອງໂຊວຽດ

ໂຄງການນີ້ຮວມທັງການຕິດຕັ້ງສຖານີຮັບສົ່ງໂດຍກົງຈາກດາວທຽມ ໂຄງການນີ້ນັບເປັນເຄື່ອງທີ ໔ ແລ້ວທີ່ໄດ້ຮັບການຊ່ວຍເຫລືອແລະຮ່ວມມືຈາກໂຊວຽດ. ກ່ອນໜ້ານີ້ທາງພາກເໜືອ ທີ່ແຂວງຫລວງພຣະບາງ ກໍໄດ້ຮັບເຄື່ອງຮັບສົ່ງຄື້ນໂທຣະທັດທີ່ຄ້າຍຄືກັນນີ້ເຊັ່ນກັນ.

ການຕິດຕັ້ງອຸປກອນຕ່າງໆໄດ້ເລີ້ມແລ້ວແຕ່ເດືອນພຶສຈິກາ ໑໙໙໐ ແລະຄາດວ່າຈະແລ້ວໃນເດືອນ ມະກະຣາ ໑໙໙໑.

(ຈາກ FBIS 10 JAN 91)

*<u>ການປັບປຸງສນາມບິນໃນປະເທດລາວ</u>*

ສນາມບິນທາງພາກເໜືຂອງລາວ ໓ ແຫ່ງຈະມີການປັບປຸງສ້ອມແປງ ພາຍໃຕ້ໂຄງການພັທນາເສຖກິດ ໕ ປີ ຊຸດທີ ໓ (ປີ ໑໙໙໑-໑໙໙໕). ສນາມບິນທັງ ໓ ແຫ່ງດັ່ງກ່າວນີ້ ຢູ່ໃນແຂວງ ຫລວງນ້ຳທາ, ແຂວງອູດົມໄຊ ແລະ ແຂວງພົງສາລີ ການສ້າງສນາມບິນ ທີ່ເມືອງຄຳເກີດ ແຂວງບໍລິຄຳໄຊ ກໍກະວ່າຈະສຳເຣັດຮຽບຮ້ອຍໃນເດືອນ ທັນວາ ໑໙໙໐.

(ຈາກ Indochina Digest)

*<u>ເປີດຂົວ "ທີ ໔ ທັນວາ "ທີ່ປາກເຊ</u>*

ຂົວຂ້າມນ້ຳທີ່ເມືອງປາກເຊ ແຂວງຈຳປາສັກທີ່

ມີຊື່ວ່າ "ຂົວທີ ໔.ທັນວາ" ຊຶ່ງໄດ້ຕັ້ງຊື່ໃສ່ຄືກັນກັບ ວັນສ້າງຕັ້ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໄດ້ເປີດເປັນທາງການແລ້ວ ໃນວັນທີ ໑໗ ພຶສຈິກາ ໑໙໙໐ ຂົວຂ້າມນ້ຳເຊໂດນແຫ່ງນີ້ຍາວ ໕໔໔ ແມຕ ແລະກວ້າງ ໑໑ ແມຕ ຊຶ່ງໄດ້ຮັບການຊ່ວຍເຫລືອໃນຄ່າກໍ່ສ້າງຈາກ ສະຫະພາບໂຊວຽດ.

---

<u>ໂຮງແຮມໃຫຍ່ ໔ ດາວຈະເລີ້ມລົງມືສ້າງທີ່ວຽງຈັນ</u>

ການກໍ່ສ້າງໂຮງແຮມຂັ້ນມາຕະຖານສາກົນ ໔ ດາວ ຊຶ່ງຈະໃຊ້ຄ່າກໍ່ສ້າງທັງຫມົດ $ ໑໘ ລ້ານດອລລາ ກະວ່າຈະເລີ້ມລົງມືສ້າງໃນເດືອນ ເມສາ ໑໙໙໑ ນີ້ ທີ່ນະຄອນວຽງຈັນ. ໂຮງແຮມທີ່ຈະສ້າງນີ້ ມີຊື່ວ່າ Mekong House Hotel ຊຶ່ງໄດ້ມີການຮ່ວມມືລະຫວ່າງ ນັກລົງທຶນຊາວອະເມຣິກັນ ທ່ານ Don Scott ແລະ ຣັຖບານ ສປປລ. ດ້ານການຈັດການບໍຣິຫານໂຮງແຮມນີ້ ຈະແມ່ນ Premier International Hotel of Manila and Hong Kong ເປັນຜູ້ຈັດການ ບໍຣິຫານ.

---

<u>ລາວ ລົງນາມການຮ່ວມມືລົງທຶນກັບບໍຣິສັດຂອງສະຫະຣັດ</u>

ຂ່າວສານປະເທດລາວແຈ້ງວ່າ ບໍຣິສັດຂອງອະເມຣິກັນ ໔ ບໍຣິສັດ ຄື Shlapak and the Bonneville Pacific Corporation ຈະລົງທຶນໃນດ້ານການສຳຣວດ ແລະການກໍ່ສ້າງສະຖານີ ເຂື່ອນກັ້ນນ້ຳຜລິດກຳລັງໄຟຟ້າ ໃນພາກກາງ ແລະ ພາກໃຕ້ຂອງລາວ ບໍຣິສັດ Shlapak ຍັງຈະລົງທຶນກ່ຽວກັບການສຳຣວດນ້ຳມັນ ແລະ ແກ໊ສທັມມະຊາດ ໃນແຂວງວຽງຈັນ, ໄຊຍະບຸຣີ ແລະ ຄຳມ່ວນ ນຳອີກ.

ການຕົກລົງກ່ຽວກັບການລົງທຶນນີ້ ໄດ້ລົງນາມກັນທີ່ ນະຄອນວຽງຈັນ ໃນມື້ວັນທີ ໑໘ ມະກະຣາ ໑໙໙໑ ຣະຫວ່າງທ່ານເພົ້າ ບຸນນະຜົນ ຣັຖມົນຕຣີກະຊວງການຄ້າ ແລະພົວພັນເສຖກິດຕ່າງປະເທດ ແລະ ຍັງເປັນລອງປະທານຄະນະກັມມະການ ການບໍຣິຫານ ແລະ ການລົງທຶນ ແລະ ທ່ານ Milton W. Shlapak ປະທານບໍຣິສັດ Shlapak ແລະ ທ່ານ Lwynn Johnson Director of the Bonneville Pacific Corporation.

ຮ່ວມເປັນພະຍານໃນການລົງນາມຕົກລົງກັນຄັ້ງນີ້ ກໍມີເຈົ້າຫນ້າທີ່ຂັ້ນສູງຂອງລາວ ແລະອະເມຣິກັນຫລາຍທ່ານ ຣວມທັງທ່ານ Salmon ອຸປທູຕສະຫະຣັຖ ປະຈຳປະເທດ ສປປ ລາວ.

(ຈາກ FBIS 17 JAN. 1991)

---

<u>ນ້ຳມັນທີ່ລາວຂາດຕລາດເພາະມີພວກສວຍໂອກາດ</u>

ສະຖານະການທີ່ອ່າວເປີເຊັຽ ໄດ້ມີຜົນກະທົບກະເທືອນຕໍ່ຣະບົບເສຖກິດຂອງໂລກ, ໃນຫວ່າງບໍ່ດົນມານີ້ ປັ໊ອມນ້ຳມັນໃນເຂດກຳແພງນະຄອນວຽງຈັນໄດ້ຖືກຢຸດຊະງັກໄປຊົ່ວຄາວ ເພາະການຂົນສົ່ງມີການຊັກຊ້າລົງ

ກ່ຽວກັບເຣື້ອງນີ້ ທ່ານ ທອງຈັນ ພົນລາຊວົງ ຣັຖມົນຕຣີຊ່ວຍກະຊວງການຄ້າ ແລະການທ່ອງທ່ຽວເຈົ້າຫນ້າທີ່ຊັ້ນຜູ້ໃຫຍ່ທີ່ມີຫນ້າທີ່ຄວບຄຸມບໍຣິສັດນ້ຳມັນເຊື້ອເພີງລາວ ແລະຜູ້ຈັດການ ນ້ຳມັນ Shell Society of Laos ໄດ້ພຍາຍາມຢ່າງຫນັກ ວ່າການທີ່ນ້ຳມັນຂາດເຂີນໃນປັ໊ອມນ້ຳມັນຫລາຍໆແຫ່ງໃນກຳແພງນະຄອນວຽງຈັນນັ້ນແມ່ນຂ່າວໂຄສະນາຊວນເຊື່ອຂອງພວກທີ່ບໍ່ຫວັງດີຕໍ່ຣັຖບານ

ຝູງຊົນທີ່ໃຊ້ຣົດເປັນພາຫະນະຕ່າງກໍພາກັນໄປຊື້ນ້ຳມັນເຊື້ອເພີງໄປເກັບໄວ້ ຊຶ່ງພວກເຂົາຢ້ານວ່າຈະມີການຂາດເຂີນນ້ຳມັນ. ທາງເຈົ້າຫນ້າທີ່ບໍຣິສັດນ້ຳມັນເຊື້ອເພີງລາວ ແລະຜູ້ຈັດການບໍຣິສັດນ້ຳມັນກາຫອຍ ໄດ້ຮັບຮອງວ່າ ບໍຣິສັດທັງສອງມີນ້ຳມັນພຽງພໍແກ່ຄວາມຕ້ອງການຂອງສັງຄົມ ໃນຣາຄາເດີມ ຄື ໔໘໗- ໔໙໓ ກີບຕໍ່ລິດ ແລະ ໓໔໐ ກີບຕໍ່ລິດ ສຳຣັບນ້ຳມັນ Super.

ກະຊວງການຄ້າ ແລະ ທ່ອງທ່ຽວ ໂດຍການຮ່ວມມືກັບກະຊວງມະຫາດໄທຍ ຈະໃຊ້ມາຕຣະການເຂັ້ມງວດ ຕໍ່ພວກທີ່ສ້າງຄວາມປັ່ນປ່ວນ ແລະຂຶ້ນຣາຄານ້ຳມັນພາຍໃຕ້ສະພາບການໃນປັດຈຸບັນ.

ບໍຣິສັດນ້ຳມັນເຊື້ອເພີງລາວ ມີປັ໊ອມນ້ຳມັນຢູ່ທີ່ວຽງຈັນ ໑໐ ແຫ່ງ ແລະ ເປັນຜູ້ສົ່ງນ້ຳມັນຈຳຫນ່າຍທົ່ວ

ທຸກໆແຂວງພາຍໃນປະເທດ. ສ່ວນບໍຣິສັດນ້ຳມັນກາຫອຍ (Shell Society of Laos) ມີຢູ່ ៣ ປ້ອມ ໃນ ວຽງຈັນ, ສວັນນະເຂດ ແລະ ແຂວງຈຳປາສັກ.

(ຈາກ FBIS 16 JAN. 1991)

---

<u>ລາວ ແລະ ໄທຍຈະຮ່ວມແຂ່ງຂັນນາງງາມ</u>

ຂ່າວຈາກສະກົນນະຄອນ ປະເທດໄທຍແຈ້ງວ່າ ຈະມີການແຂ່ງຂັນຊິງຕຳແໜ່ງ ຣາຊິນີນາງງາມ ຣະຫວ່າງໄທຍ ແລະລາວ ທີ່ຈັງຫວັດສະກົນນະຄອນປະເທດໄທຍ ໃນມື້ວັນທີ ໗ ເມສາ ໑໙໙໑ ເພື່ອສ້າງສັມພັນທະໄມຕຣີຣະຫວ່າງປະເທດທັງສອງໃຫ້ແໜ້ນແຟ້ນຍິ່ງຂຶ້ນ.

ໃນການແຂ່ງຂັນນາງງາມຄັ້ງນີ້ ຝ່າຍໄທຍຈະມີນາງສາວສົ່ງເຂົ້າແຂ່ງຂັນ ໑໗ ຄົນ ຈາກ ໑໗ ຈັງຫວັດ ໃນເຂດພາກອີສານ ແລະຝ່າຍລາວ ຈະສົ່ງເຂົ້າແຂ່ງຂັນ ໑໕ ຄົນ ຊຶ່ງຈະແມ່ນນາງສາວທີ່ຖືກຄັດເລືອກມາແລ້ວໃນການເສັງຄັດເລືອກໃນວັນທີ ໑ ເດືອນມີນາ ໑໙໙໑ ທີ່ນະຄອນວຽງຈັນ. ຣາຍການອັນມະໂຫລານຄັ້ງນີ້ຈະຖືກຖ່າຍທອດອອກໂທຣະທັດຊ່ອງ ៣ ຂອງໄທຍ ເລີ້ມແຕ່ເວລາ ໑໐ ໂມງແລງ ເຖິງທ່ຽງຄືນ.

ຜູ້ຊະນະເລີດການແຂ່ງຂັນຄັ້ງນີ້ ຈະໄດ້ຮັບຣາງວັນເງິນສົດ ໕໐,໐໐໐ ບາດ ແລະສິ່ງຂອງອື່ນໆອີກຫຼາຍຢ່າງ ສ່ວນຜູ້ທີ່ໄດ້ທີ ໒ ຈະໄດ້ຮັບເງິນສົດເປັນຈຳນວນ ໒໐,໐໐໐ ບາດ ແລະຜູ້ທີ່ຢູ່ໃນຮອບສຸດທ້າຍນັ້ນແຕ່ລະຄົນກໍຈະໄດ້ຮັບເງິນສົດຈຳນວນ ໑໐,໐໐໐ ບາດ

ຄະນະກັມມະການຈັດງານຜູ້ນຶ່ງກ່າວວ່າ ການແຂ່ງຂັນນາງງາມຄັ້ງນີ້ "ຣາງວັນ ບໍ່ແມ່ນສິ່ງສຳຄັນ ແຕ່ຈຸດມຸ້ງໝາຍຂອງການຈັດງານຄັ້ງນີ້ກໍຄື ສົ່ງເສີມໃຫ້ ສັມພັນທະພາບຣະຫວ່າງ ປະຊາຊົນໄທຍ ແລະລາວ ດີຂຶ້ນ"

ນາງສາວຜູ້ຖືກເລືອກ ແລະຊະນະເລີດໃນການແຂ່ງຂັນຄັ້ງນີ້ ຈະຕາງໜ້າປະເທດລາວ ໃນການເຂົ້າແຂ່ງຂັນປະກວດນາງງາມໂລກ ທີ່ກຸງລອນດອນ ປະເທດອັງກິດ ໃນປີ ໑໙໙໑.

ຜູ້ຈັດຣາຍການ ການປະກວດຄົນນຶ່ງກ່າວວ່າ ຜູ້ຊະນະເລີດນາງງາມຄັ້ງນີ້ ຈະເປັນ ຣາຊິນີນາງງາມລາວຄົນທຳອິດ ທີ່ຖືກສົ່ງເຂົ້າປະກວດນາງງາມໂລກ.

(ຈາກ ບາງກອກໂພສ ໒໙ ທັນວາ ໑໙໙໑)

<u>ຕ່າງປະເທດລົງທຶນທີ່ ສປປລ</u>

ຂ່າວຈາກກະຊວງການຄ້າ ແລະພົວພັນເສຖກິດຕ່າງປະເທດຂອງລາວ ແຈ້ງວ່າ ການລົງທຶນຂອງຕ່າງປະເທດ ໃນປະເທດລາວ ຕັ້ງແຕ່ເລີ້ມຕົ້ນ ຈົນເຖິງປີ ໑໙໙໐ ທັງໝົດເປັນຈຳນວນເງິນ $໑໗໙ ລ້ານດອລລາສະຫະຣັຖ.

ການລົງທຶນ ໄດ້ຖືກແບ່ງອອກເປັນ ៣ ປະເພດໃຫຍ່ໆ ຄື ໑) ປະເພດສັນຍາຮັບເໝົາ ໒) ຮ່ວມລົງທຶນ ៣) ທຸຣະກິດທີ່ເຈົ້າຂອງທັງໝົດແມ່ນຕ່າງປະເທດ.

ນັກທຸຣະກິດຕ່າງປະເທດ ຈົນເຖິງປັດຈຸບັນ ໄດ້ລົງທຶນທາງດ້ານການທຍິບເສື້ອຜ້າ ເພື່ອສົ່ງອອກຂາຍ ທີ່ຕ່າງປະເທດ, ດ້ານການກະເສດ, ດ້ານສິນຄ້າຂາເຂົ້າ ແລະຂາອອກ, ດ້ານການໂຮງແຮມ-ທ່ອງທ່ຽວ, ດ້ານໄມ້-ເຄື່ອງຫວາຍ, ການທະນາຄານ, ດ້ານປຶກສາທຸຣະກິດ, ດ້ານການກໍ່ສ້າງ ແລະສ້ອມແປງເສັ້ນທາງ, ດ້ານການອຸສາຫະກັມ ແລະຫັດຖະກັມຕ່າງໆ.

ທາງກະຊວງພົວພັນເສຖກິດຕ່າງປະເທດ ຣາຍງານຕໍ່ໄປວ່າ ໃນຣະຍະປີ ໑໙໗໖ - ໑໙໙໐ ຣັຖບານ ສປປລ ໄດ້ຮັບເງິນຊ່ວຍເຫລືອ ແລະເງິນກູ້ຢືມ ເປັນຈຳນວນທັງໝົດ $ ໗໖໑.໖ ລ້ານດອລລາສະຫະຣັຖ.

(ຂ່າວຈາກ FBIS 18 JAN. 1991)

---

<u>ລາວບໍ່ອະນຸຍາດໃຫ້ ມຸສລິມໄທຍ ໗ ຄົນເຂົ້າປະເທດ</u>

ຂ່າວຈາດໜອງຄາຍ ປະເທດໄທຍແຈ້ງວ່າ ທ່ານຮ້ອຍເອກສຸຣິນ ສາຣະທານ ລອງຫົວໜ້າຝ່າຍກວດຄົນເຂົ້າເມືອງຂອງໄທຍທີ່ໜອງຄາຍກ່າວວ່າ ໃນມື້ວັນທີ ໒໔ ມະກະຣາ ໑໙໙໑ ທາງເຈົ້າໜ້າທີ່ກວດຄົນເຂົ້າເມືອງຂອງລາວທີ່ທ່າເດື່ອ ແຂວງວຽງຈັນ ບໍ່ອະນຸຍາດໃຫ້ຊາວມຸສລິມໄທຍ ຈຳນວນ ໗ ຄົນ ເຂົ້າປະເທດລາວເພາະຢ້ານມີການກໍ່ການຮ້າຍເກີດຂຶ້ນທີ່ນະຄອນວຽງຈັນ.

ຊາວມຸສລິມໄທຍ ຈຳນວນ ໗ ຄົນນີ້ ແມ່ນມາຈາກຈັງຫວັດ ປັດຕານີ ແລະ ຢະຣາ ທາງພາກໃຕ້ຂອງປະເທດໄທຍ ເຂົາໄດ້ກ່າວວ່າ ພວກເຂົາໄດ້ຂໍອະນຸຍາດ

ຈາກເຈົ້າໜ້າທີ່ໄທຍ ເພື່ອຂ້າມໄປຢັຽມຍາມຍາດພີ່ນ້ອງ ທີ່ນະຄອນວຽງຈັນ ແລະເຈົ້າໜ້າທີ່ໄທຍ ໄດ້ອະນຸຍາດໃຫ້ແລ້ວ ແລະພວກເຂົາກໍໄດ້ຂີ່ເຮືອຂ້າມນ້ຳຂອງໄປສູ່ທ່າເດື່ອ ປະເທດລາວ.

ເຖິງຢ່າງໃດກໍດີ ເຈົ້າໜ້າທີ່ຂອງລາວທີ່ດ່ານກວດຄົນເຂົ້າເມືອງທີ່ທ່າເດື່ອ ບໍ່ໄດ້ອະນຸຍາດໃຫ້ຊາວມຸສລິມໄທດັ່ງກ່າວເຂົ້າປະເທດ. ທ່ານຮ້ອຍເອກສຸຣິນ ກ່າວວ່ານຶ່ງໃນຈຳນວນ ໗ ຄົນນັ້ນຄື ນາຍແສງ ດູມິແດ ຊາວຕຳບົນລະແອ ອຳເພີຍະຫາ ຈັງຫວັດຣະຍາ ໄດ້ຈາກກທມອງຄາຍໄປສູ່ປະເທດລາວໃນວັນເສົາ ແລະກັບຄືນໜອງຄາຍໃນມື້ຕໍ່ມາ.

ທ່ານຮ້ອຍເອກສຸຣິນ ໂດຍອ້າງຕາມຄຳເວົ້າ ຂອງພັລຍານັກການທູດອອສເຕຼເລັຽຜູ້ນຶ່ງກ່າວວ່າ ໃນມື້ວັນອາທິດ ມີນາມບັດຂອງສະມາຊິກ ອົງການປົດປ່ອຍປາແລສໄຕຕິດຢູ່ຕາມຣົຖສ່ວນຕົວຂອງນັກການທູຕຕ່າງໆທີ່ນະຄອນວຽງຈັນ ຊຶ່ງເຮັດໃຫ້ນັກການທູຕຕ່າງປະເທດທີ່ວຽງຈັນມີຄວາມຕື່ນຕົກໃຈ ແລະຢ້ານກົວ.

ທ່ານສຸຣິນ ກ່າວວ່າ ເຫດການທີ່ເກີດຂຶ້ນ ອາດບໍ່ກ່ຽວຂ້ອງກັບທີ່ນາຍແສງ ໄດ້ຂ້າມໄປວຽງຈັນມື້ວັນເສົາ. ແຕ່ວ່າເມື່ອນາຍແສງ ແລະຊາວມຸສລິມອີກ ๖ ຄົນຈະຂ້າມໄປລາວອີກໃນມື້ວັນທີ ໒໒ ກໍຖືກປະຕິເສດ ບໍ່ອະນຸຍາດໃຫ້ເຂົ້າເມືອງຈາກເຈົ້າໜ້າທີ່ຂອງລາວ.

(ຈາກ FBIS 23 JAN. 1991)

ທ່ານສາລີ ວົງຄຳຊາວ ເສັຽຊີວິດ

ທ່ານ ສາລີ ວົງຄຳຊາວ ຮອງນາຍົກຣັຖມົນຕຣີ ຣັຖມົນຕຣີກະຊວງເສຖກິດ,ແຜນການ ແລະການເງິນ ທັງຍັງເປັນຄະນະກັມມະການ ກົມການເມືອງ ສູນກາງພັກປະຊາຊົນປະຕິວັດລາວ ໄດ້ເຖິງແກ່ກັມໄປແລ້ວ ໃນມື້ວັນທີ ໒໓ ມະກະຣາ ໑໙໙໑ ຣວມອາຍຸໄດ້ ໖໖ ປີ.

ທ່ານສາລີ ວົງຄຳຊາວ ໄດ້ເສັຽຊີວິດທີ່ໂຮງພຍາບານເບີ ໑ ທີ່ນະຄອນຫລວງວຽງຈັນ ຫລັງຈາກໄດ້ເຈັບປ່ວຍມາເປັນເວລາຫລາຍເດືອນ. ສ່ວນສາເຫດການຕາຍບໍ່ໄດ້ແຈ້ງຣາຍຣະອຽດ.

ທ່ານສາລີ ວົງຄຳຊາວ ເປັນນຶ່ງໃນຄະນະກັມມະການກົມການເມືອງຂອງພັກຄອມມິວນິສລາວ ຊຶ່ງເປັນຄະນະທີ່ມີອຳນາດສູງສຸດໃນພັກຄອມມິວນິສ ນັບແຕ່ໄດ້ກຳອຳນາດຈາກຣັຖບານແຫ່ງຣາຊອານາຈັກລາວມາແຕ່ປີ ໑໙໗໕

ທ່ານສາລີ ໄດ້ຖືກແຕ່ງຕັ້ງເປັນຮອງນາຍົກ ໃນປີ ໑໙໘໒ ແລະ ໄດ້ຖືກແຕ່ງຕັ້ງ ເປັນຄະນະກັມມະການວາງແຜນຂອງຣັຖ ແລະການເສຖກິດ.

(ຈາກ NEW YORK TIME JAN.25, 1991)

ຝຣັ່ງ ລົງນາມການຕົກລົງຮ່ວມມືດ້ານການສຶກສາກັບລາວ

ໃນມື້ວັນທີ ໒໖ ມະກະຣາ ໑໙໙໑ ທ່ານຄຳຕັນ ຈັນທະລາ ຣັຖມົນຕຣີຊ່ວຍກະຊວງສຶກສາ ແລະກິລາ ໄດ້ລົງນາມກັບ ທ່ານ Daniel Dupont ເອກອັຄຣັຖທູຕຝຣັ່ງເສດ ປະຈຳລາວ ກ່ຽວກັບການຕົກລົງຮ່ວມມື ດ້ານການສຶກສາຂັ້ນສູງ.

ການຕົກລົງກັນນີ້ ຈະເລີ້ມປະຕິບັດນັບແຕ່ຕົ້ນປີ ໑໙໙໑, ທາງຣັຖບານຝຣັ່ງເສດ ຈະໃຫ້ການຊ່ວຍເຫລືອດ້ານການເງິນ ແລະດ້ານການເທັກນິກແກ່ປະເທດລາວໃນການຈັດຕັ້ງ ສະຖາບັນ ການປົກຄອງ ແລະການບໍຣິຫານແຫ່ງຊາດ (The National Institute of Administration and Management)

ທາງສະຖາບັນ ຈະເປີດສອນເປັນ ๓ ປະເພດ ຄື ຫລັງຈາກຈົບປຣິນຍາ ,ວິຊາສັມມະນາຣະຍະສັ້ນ, ວິຊາຕ່າງໆທີ່ intensive ແລະວິຊາທັມມະດາ.

(ຈາກ FBIS 4 FEB. 1991)

ທະນາຄານໂລກ ພໍໃຈ ການບໍຣິຫານເສຖກິດທີ່ລາວ

Mr. Attila Karaosmangly ລອງປະທານທະນາຄານໂລກ ຊຶ່ງມີໜ້າທີ່ຮັບຜິດຊອບ ດ້ານດຳເນີນການບໍຣິຫານໃນຂົງເຂດເອເຊັຽ ໄດ້ໃຫ້ສັມພາດແກ່ນັກຂ່າວທີ່ໂຮງແຮມລ້ານຊ້າງ ໃນມື້ວັນທີ ๓໑ ມະກະຣາ ວ່າ ທ່ານພໍໃຈ ແລະຍິນດີທີ່ການດຳເນີນງານບໍຣິຫານກົນໄກເສຖກິດໃໝ່ໃນປະເທດລາວ

ທ່ານກ່າວວ່າ ນະໂຍບາຍນີ້ ໄດ້ຊະນະຈິດໃຈດຶງ ຄວາມສນັບສນຸນຈາກຕ່າງປະເທດທັງຫລາຍ ໂດຍສະເພາະທະນາຄານໂລກ ນັບເປັນເວລາຫລາຍປີ ທີ່ໃຫ້ຄວາມອຸ້ມຊູ ຊ່ວຍເຫລືອໃນການປຣູບແປງໂຄງສ້າງເສຖກິດ ແລະການພັທນາເສຖກິດຂອງລາວ.

ທ່ານຮອງປະທານທະນາຄານໂລກ ກ່າວວ່າ ທະນາຄານໂລກ ຈະສນັບສນຸນ ຊ່ວຍເຫລືອອີກຫລາຍໆໂຄງການສຳຣັບປະເທດລາວ ຊຶ່ງຣວມທັງ ການຊ່ວຍເຫລືອດ້ານໂທຣະຄົມມາຄົມ, ການກະເສດ, ການສຶກສາ, ສາທາຣະນະສຸກ, ການສົ່ງເສີມພັທນາອາຊີບແມ່ຍິງລາວ.

ທ່ານ Attila Karaosmanogly ໄດ້ເປັນຫົວໜ້າຄະນະ ນຳພາເຈົ້າໜ້າທີ່ຂັ້ນສູງຂອງທະນາຄານໂລກ ໄປຢ້ຽມຢາມລາວ ເປັນເວລາ ໕ ມື້ ຕັ້ງແຕ່ວັນທີ ໒໗ ມະກະຣາ ເຖິງວັນທີ ໑ ກຸມພາ ໑໙໙໑.

(FBIS 5 FEB. 1991)

---

<u>ເຈົ້າໜ້າທີ່ຂອງລາວມາອະເມຣິກາ ຫາຄົນໄປລົງທຶນ</u>

ເຈົ້າໜ້າທີ່ ສະພາການຄ້າ ຂອງຣັຖບານລາວ ໄດ້ເດີນທາງມາປະເທດອະເມຣິກາເປັນຄັ້ງທຳອິດໃນຣະຍະ ໑໕ ປີຂອງການສ້າງຕັ້ງປະເທດ ສປປລ ເພື່ອມາສັງເກດການ ແລະຊອກຫາການລົງທຶນຈາກຕ່າງປະເທດ ຄະນະຜູ້ຕາງໜ້າສະພາການຄ້າລາວ ໄດ້ມາເຖິງເມືອງ Fresno ຣັຖຄາລິຟໍເນັຽ ໃນມື້ວັນສຸກ ທີ ໗ ກຸມພາ.

ທ່ານຈັນເພັງ ບຸນນະຜົລ ຮອງປະທານສະພາການຄ້າ ແລະອຸສາຫະກັມ ແຫ່ງຊາດລາວ ໄດ້ກ່າວວ່າ "ຣັຖບານລາວໄດ້ເປີດກວ້າງຣະບົບການຕລາດແລ້ວ ດັ່ງນັ້ນ ພວກເຮົາຈຶ່ງມາທີ່ນີ້ເພື່ອມາຮຽນຮູ້"

ໃນການຢ້ຽມຢາມສະຫະຣັຖອະເມຣິກາຄັ້ງນີ້ຄະນະຜູ້ຕາງໜ້າສະພາການຄ້າ ແລະອຸສາຫະກັມແຫ່ງຊາດ ຊຶ່ງແມ່ນ ມູນນິທິເອເຊັຽ(Asia Foundation) ທີ່ເມືອງ San Francisco ເປັນຜູ້ສະປອນເຊີ. ທາງຝ່າຍລາວໄດ້ເປີດໃຫ້ນັກຂ່າວສັມພາດ ທີ່ຫ້ອງການສະພາການຄ້າຂອງເມືອງ Fresno. ຄະນະຜູ້ຕາງໜ້າສະພາການຄ້າຂອງລາວ ໄດ້ໄປຢ້ຽມຢາມ San Francisco ແລະ ຈະເດີນທາງຕໍ່ໄປທີ່ ກຸງວໍຊິງຕັນ ດີຊີ ແລະເມືອງ ຊີອາເຕິລ ຣັຖວໍຊິງຕັນ.

ທ່ານໄຕ້ ວາງ ປະທານສະພາການຄ້າລາວອະເມຣິກັນ ຊຶ່ງມີສູນກາງທີ່ເມືອງ Fresno ໄດ້ກ່າວວ່າ Fresno ເປັນເມືອງກະສິກັມ ແລະເປັນເມືອງທີ່ມີຊາວມົ້ງຢູ່ ປະມານ ໔໐,໐໐໐ ຄົນ.

ທ່ານໄຕ້ ວາງ ກ່າວວ່າ ປະເທດລາວ ຕ້ອງການຄວາມຊ່ວຍເຫລືອ ເພື່ອຟື້ນຟູສ້າງສາພັທນາປະເທດ ແລະຍິນດີຕ້ອນຮັບ ບໍຣິສັດບໍ່ແຮ່ຕ່າງໆ, ບໍຣິສັດຂົນສົ່ງ, ບໍຣິສັດການບິນ, ການໂທຣະເລກໂທຣະຄົມມາຄົມ ແລະໂຕແທນຈຳໜ່າຍບໍຣິສັດຂາຍສິ່ງຕ່າງໆ.

ອ້າງຕາມຣາຍງານຂອງຣັຖບານ ວ່າຣະຫວ່າງປີ ໑໙໘໘ ແລະ ໑໙໙໐ ຕ່າງປະເທດໄດ້ລົງທຶນໃນປະເທດລາວ ປະມານ $໔໔໓ ລ້ານດອລລາ. ປະເທດທີ່ລົງທຶນໄດ້ແກ່ປະເທດ ອອສເຕຼເລັຽ, ສະວີເດັນ, ຍີ່ປຸ່ນ, ຈີນ ແລະປະເທດໄທຍ.

ຫວ່າງບໍ່ນານມານີ້ ທາງຣັຖບານລາວ ຍັງໃຫ້ສັມປະທານແກ່ບໍຣິສັດ Hunt Oil ຂອງ Texas ເພື່ອທຳການສຳຣວດພື້ນທີ່ ຊອກຫານ້ຳມັນທາງແຂວງພາກໃຕ້ຂອງລາວ.

---

<u>ລາວລົງນາມແລກປ່ຽນສິນຄ້າກັບວຽດນາມ</u>

ໃນມື້ວັນທີ ໑໓ ກຸມພາ ໑໙໙໑ ວຽດນາມ ແລະລາວໄດ້ລົງນາມ ຕົກລົງກັນກ່ຽວກັບການແລກປ່ຽນສິນຄ້າ ແລະການຈ່າຍເງິນສຳຣັບປີ ໑໙໙໑-໑໙໙໕ ແລະ ສົນທິສັນຍາກ່ຽວກັບແລກປ່ຽນສິນຄ້າແລະການຈ່າຍເງິນສຳຣັບປີ ໑໙໙໑. ຮ່ວມລົງນາມຄັ້ງນີ້ຝ່າຍວຽດນາມໄດ້ແກ່ທ່ານ ຮວງ ມິນ ທັງ ຣັຖມົນຕຣີການຄ້າຂອງວຽດນາມ, ຝ່າຍລາວ ໄດ້ແກ່ທ່ານ ຄຳເຜີຍ ແກ້ວບົວຣະພາ ຣັຖມົນຕຣີການຄ້າແລະທ່ອງທ່ຽວ ຂອງລາວ ຊຶ່ງເປັນ ຫົວໜ້າຄະນະເສຖກິດໄປຢ້ຽມຢາມວຽດນາມ .

ພາຍໃຕ້ສົນທິສັນຍາສຳຣັບປີ ໑໙໙໑ ລາວຈະຂາຍສິນຄ້າໃຫ້ວຽດນາມເປັນຈຳນວນ ໔໔ ຊະນິດ ແລະຈະຊື້ເຄື່ອງຈາກວຽດນາມ ໓໑ ຊະນິດ. ການແລກປ່ຽນສິນຄ້າຣະຫວ່າງ ໔ ປະເທດຈະເປັນມູນຄ່າທັງໝົດ $ ໑໔ ລ້ານດອລລາສະຫະຣັດ ສຳຣັບປີນີ້.

---



24/VII
ห้ามจำหน่าย

# ກຳລັງທັບເສຣີປະຊາທິປະໄຕລາວ
# Lao Liberal Democrat Force
P.O.BOX 188470 Sacramento, CA 95818


ຖແລງການ

ຂອງ ກຳລັງທັບ ເສຣີປະຊາທິປະໄຕລາວ ສບ/01/91

---

ພວກເຮົາກຳລັງທັບ ເສຣີປະຊາທິປະໄຕລາວ ໄດ້ອອກ ຖແລງການສະບັບນີ້ ເພື່ອແຈ້ງໃຫ້ບັນດາທ່ານ ທັງຫລາຍ ໄດ້ຮູ້ ແລະ ເຂົ້າໃຈ ເຖິງຄວາມເປັນມາ, ວັດຖຸປະສົງ ແລະ ວຽກງານຂອງກຳລັງທັບ ເສຣີປະຊາທິປະໄຕລາວ ໃນປະຈຸບັນ.

- ກຳລັງທັບ ເສຣີປະຊາທິປະໄຕ ຈັດຕັ້ງຂຶ້ນມາແຕ່ປີ 1984. ເລີ່ມຕົ້ນຈາກ ການປູພື້ນຖານ ທາງດ້ານການເມືອງ, ເກັບກຳເອົາບຸກຄົນທີ່ມີນ້ຳໃຈເສັຽສລະ ໃນການຕໍ່ສູ້ເພື່ອສິດ ເສຣີປະຊາທິປະໄຕ ໃນລາວ.
- ກຳລັງທັບ ເສຣີປະຊາທິປະໄຕ ແມ່ນກຳລັງການເມືອງ ທີ່ປະກອບດ້ວຍ ປະຊາຊົນ ບັນດາ ຊົນຊາດຊົນເຜົ່າຕ່າງໆ ທີ່ລຸກຂຶ້ນຕໍ່ສູ້ ເພື່ອແກ້ໄຂທັນປ່ຽນ ລະບອບຜະເດັດການ ໃນລາວ ໃຫ້ກ້າວໄປສູ່ລະບອບເສຣີປະຊາທິປະໄຕຢ່າງແທ້ຈິງ.
- ຍ້ອນມີແນວທາງ ການຕໍ່ສູ້ ອັນຖືກຕ້ອງເປັນທັມ, ຍ້ອນມີຄວາມເຂົ້າໃຈ ໃນບັນຫາຂອງຊາດຢ່າງເລິກເຊິ່ງ ແລະ ການລົງມື ປະຕິບັດຕົວຈິງຢ່າງເຂັ້ມແຂງ, ກຳລັງທັບເສຣີປະຊາທິປະໄຕ ຈຶ່ງໄດ້ກາຍ ເປັນກຳລັງ ການຈັດຕັ້ງ ອັນແໜ້ນແຫ່ນ, ສາມາດກ້າວໄປສູ່ການແກ້ໄຂ ບັນຫາຊາດ ໂດຍສັນຕິວິທີໄດ້.

ເປົ້າໝາຍການຕໍ່ສູ້ ຂອງ ກຳລັງທັບ ເສຣີປະຊາທິປະໄຕ ມີດັ່ງນີ້:

1/ ຕໍ່ສູ້ເພື່ອສ້າງເງື່ອນໄຂເປີດສັກກະຣາດໃໝ່ ແບບເສຣີປະຊາທິປະໄຕ;

2/ ໃຫ້ກຳລັງຕ່າງດ້າວ ຮັບຮູ້ ແລະ ນັບຖື ອະທິປະໄຕ ຂອງລາວ

ນະໂຍບາຍ ການຕໍ່ສູ້ ຂອງ ກຳລັງທັບ ເສຣີປະຊາທິໄຕລາວ

- ແມ່ນແບບສັນຕິວິທີ, ປາສຈາກ ການໃຊ້ກຳລັງອາວຸດ. ສ້າງຄວາມສາມະຄີ ປອງດອງຊາດ ຫລີກເວັ້ນການປະທັດ ປະທານ ລະຫວ່າງ ຄົນລາວດ້ວຍກັນ.
- ຕໍ່ສູ້ເອົາສິດທິມະນຸດຊາດ ບົນພື້ນຖານ ຂອງ ກົດບັດສະຫະປະຊາຊາດ.

ສ່ວນພາກ ປະຕິບັດ ວຽກງານຕົວຈິງ ຂອງ ກຳລັງທັບ ເສຣີປະຊາທິປະໄຕ
ໃນປະຈຸບັນນີ້ ມີ:

1/ ປູພື້ນຖານ ການຕໍ່ສູ້ແບບ ສັນຕິວິທີໃນລາວ.

2/ ອົບຣົມ ແລະ ປຸກລະດົມ ນັກຕໍ່ສູ້ເພື່ອ ເສຣີປະຊາທິປະໄຕລາວ ໃຫ້ເຂົ້າໃຈ ໃນ ຫລັກການ ສິດທິມະນຸດຊາດ ແລະ ການປົກຄອງ ແບບ ເສຣີປະຊາທິປະໄຕ ຢ່າງເລິກເຊິ່ງ.

3/ ສ້າງພື້ນຖານ ເສຖກິດ ຂອງ ການຕໍ່ສູ້ ໃຫ້ໝັ້ນຄົງ.

4/ ກະກຽມ ແລະ ຂົນຂວາຍນັກວິຊາການລາວ ໃນຕ່າງປະເທດ ໃຫ້ ເຂົ້າປະກອບສ່ວນດຽວນີ້ ໃນການສ້າງສາພັທນາ ປະເທດລາວ ໃຫ້ ຈະເຣີນ ຮຸ່ງເຮືອງໃນອະນາຄົດ.

5/ ວາງແຜນ ການປົກຄອງ ແລະ ແຜນພັທນາ ຊາດ ໃນວົງຈອນ ແລະຫລັກການເສຣີປະຊາທິປະໄຕ ;

6/ ເປີດກ້ວາງການພົວພັນແລະສ້າງຄວາມຮັກແພງ ກັບບັນດາປະເທດ ຕ່າງໆ ໃນໂລກ ທີ່ເຫັນດີເຫັນພ້ອມນຳແນວທາງປອງດອງຊາດ ຊຶ່ງເຫັນວ່າ ເປັນແນວທາງ ອັນດຽວທີ່ ຖືກຕ້ອງ ແລະ ເໝາະສົມ ໃນຍຸກນີ້ຄື:

ກຳລັງທັບ ເສຣີປະຊາທິປະໄຕລາວ ເປັນຂອງບັນດາທ່ານ ທຸກຖ້ວນໜ້າທີ່ມີອຸດົມການຊາດອັນດຽວກັນຄື ຕໍ່ສູ້ເພື່ອສ້າງເງື່ອນໄຂເຕົ້າໂຮມລາວທັງຊາດແບບສັນຕິວິທີ, ບົນພື້ນຖານ ຄວາມຮັກແພງແລະ ນັບຖືສິດທິຂອງກັນແລະກັນ.

ດ້ວຍເຫດນີ້ເອງ ພວກເຮົາຈຶ່ງຂໍຮຽກຮ້ອງມາຍັງເພື່ອນຮ່ວມຊາດ ທຸກຖ້ວນໜ້າ ທັງພາຍໃນ ແລະນອກປະເທດຈົ່ງ ຫັນໜ້າເຂົ້າ ແກ້ໄຂບັນຫາຂອງຊາດຮ່ວມກັນ.

ໄຊຊະນະຈົ່ງເປັນຂອງຊາວລາວທັງຊາດ!

ຄະນະບໍຣິຫານສູນກາງກຳລັງທັບເສຣີປະຊາທິປະໄຕລາວ

ເມືອງ ຊັກເກຣແມນໂຕ, 21 ມັງກະຣາ 1991

---


## ບັດສັ່ງຈອງ ວາຣະສານ ສັງຄົມລາວ

ຂ້າພເຈົ້າຊື່..........................................................

ທີ່ຢູ່ປັດຈຸບັນ..........................................................

..........................................................

ໂທຣະສັບ..........................................................

ຂໍຈອງ ວາຣະສານ **ສັງຄົມລາວ** ກຳໜົດນຶ່ງປີ (໑)ປີ ຣາຄາ $໔໐.໐໐ ໃນສະຫະຣັຖ

ກະຣຸນາ ສົ່ງ ເຊັກ ຫລື ມັນນີອໍເດີ $໔໕.໐໐ ໃນການາດາ

ສັ່ງຈ່າຍໃນນາມ **ສັງຄົມລາວ** ຕາມທີ່ຢູ່ຂ້າງລຸ່ມນີ້ $໔໕.໐໐ ຕ່າງປະເທດອື່ນໆ

SANGKHOMLAO

5090 NW. 173rd Place

Portland, Oregon 97229 ເຊັນຊື່..................

Tel:(503)645-9867

# ກົດຫມາຍລາວ

ເພື່ອປະດັບສະຕິປັນຍາ ແລະເພື່ອຄວາມເຂົ້າອົກເຂົ້າໃຈກ່ຽວກັບກົດຫມາຍຂອງປະເທດລາວເຮົາ ທາງ "ສັງຄົມລາວ" ຈຶ່ງນຳເອົາກົດຫມາຍຂອງປະເທດ ສປປລ ບາງຢ່າງທີ່ຫນ້າສົນໃຈມາສເນີ ດັ່ງຕໍ່ລົງໄປນີ້ :

## ກົດຫມາຍ ວ່າດ້ວຍສັນຊາດລາວ

### ຫມວດທີ ໑

### ບົດບັນຍັດທົ່ວໄປ

**ມາດຕາ ໑.** ສັນຊາດລາວ

ສັນຊາດລາວ ແມ່ນສາຍກ່ຽວພັນທາງດ້ານກົດຫມາຍ ແລະ ການເມືອງ ຊຶ່ງຜູກຣັດບຸກຄົນຜູ້ໃດຜູ້ນຶ່ງ ກັບສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະເຮັດໃຫ້ບຸກຄົນຜູ້ນັ້ນ ມີຖານະເປັນພົນລະເມືອງລາວ.

ພົນລະເມືອງລາວ ແມ່ນ :

໑. ບຸກຄົນທີ່ມີສັນຊາດລາວ ຫລື ໄດ້ສັນຊາດລາວ ຢ່າງຖືກຕ້ອງມາກ່ອນແລ້ວ ຈົນເຖິງມື້ທີ່ກົດຫມາຍສບັບນີ້ ມີຜົນສັກສິດ;

໒. ບຸກຄົນທີ່ຜູ້ມີສັນຊາດລາວ ຫລື ໄດ້ສັນຊາດລາວຕາມກົດຫມາຍສບັບນີ້.

**ມາດຕາ ໒.** ການບໍ່ອະນຸຍາດໃຫ້ພົນລະເມືອງລາວ ມີຫລາຍສັນຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ບໍ່ອະນຸຍາດໃຫ້ພົນລະເມືອງລາວ ມີຫລາຍສັນຊາດຄວບກັນ.

**ມາດຕາ ໓.** ການຮັກສາສັນຊາດລາວໄວ້ ໃນເມື່ອຫາກມີການແຕ່ງດອງ ຫລືການຢ່າຮ້າງ

ການແຕ່ງດອງ ຫລື ການຢ່າຮ້າງ ຂອງພົນລະເມືອງລາວ ກັບບຸກຄົນທີ່ມີສັນຊາດອື່ນ ຫລື ກັບບຸກຄົນທີ່ບໍ່ມີສັນຊາດນັ້ນ ຈະບໍ່ພາໃຫ້ມີການປ່ຽນແປງສັນຊາດລາວ.

ການໄດ້ ຫລື ເສັຽສັນຊາດລາວ ຂອງຜົວ ຫລື ເມັຽ ຜູ້ໃດຜູ້ນຶ່ງ ຈະບໍ່ພາໃຫ້ສັນຊາດຂອງອີກຝ່າຍນຶ່ງ ມີການປ່ຽນແປງ.

**ມາດຕາ ໔.** ການຮັກສາສັນຊາດ ຂອງພົນລະເມືອງລາວ ທີ່ຢູ່ຕ່າງປະເທດ

ພົນລະເມືອງລາວ ທີ່ອາໄສຢູ່ຕ່າງປະເທດ ກໍຍັງຮັກສາສັນຊາດລາວຢູ່ ແລະ ຈະໄດ້ຮັບການປົກປ້ອງ ແລະ ຄຸ້ມຄອງຈາກ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ ໕.** ການບໍ່ອະນຸຍາດ ມອບໂອນພົນລະເມືອງລາວ ໃຫ້ລັດຕ່າງປະເທດ

ພົນລະເມືອງລາວ ຈະບໍ່ຖືກມອບໂອນ ໃຫ້ແກ່ລັດອື່ນໄດ້.

**ມາດຕາ ໖.** ຄົນບໍ່ມີສັນຊາດ

ບຸກຄົນທີ່ອາໄສຢູ່ໃນດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຊຶ່ງບໍ່ແມ່ນພົນລະເມືອງລາວ ແລະບໍ່ສາມາດຢັ້ງຢືນວ່າຕົນມີສັນຊາດໃດ ກໍຈະຖືວ່າເປັນຄົນບໍ່ມີສັນຊາດ.

**ມາດຕາ ໗.** ສິດໃນການຂໍເອົາສັນຊາດອື່ນ

ພົນລະເມືອງລາວ ມີສິດຂໍເອົາສັນຊາດອື່ນ ແຕ່ຕ້ອງໄດ້ປະສັນຊາດລາວເສັຽກ່ອນ.

ການປະສັນຊາດລາວ ໄດ້ກຳນົດໄວ້ໃນມາດຕາ ໑໖ ຂອງກົດຫມາຍສບັບນີ້.

## ໝວດທີ ໒
## ການໄດ້ສັນຊາດລາວ

<u>ມາດຕາ ໘</u>. ພື້ນຖານຂອງການໄດ້ສັນຊາດລາວ

ສັນຊາດລາວ ຈະໄດ້ມາຈາກ :

໑. ການເກີດ ;

໒. ການຮັບເຂົ້າສັນຊາດລາວ ;

໓. ພື້ນຖານອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍສບັບນີ້.

<u>ມາດຕາ ໙</u>. ສັນຊາດຂອງເດັກ ຊຶ່ງ ພໍ່ ແລະ ແມ່ ເປັນພົນລະເມືອງລາວ

ເດັກຊຶ່ງໃນເວລາເກີດນັ້ນ ພໍ່ ແລະ ແມ່ ເປັນພົນລະເມືອງລາວ ກໍຈະຖືວ່າເປັນພົນລະເມືອງລາວ ໂດຍບໍ່ຂຶ້ນກັບວ່າ ເດັກນັ້ນຈະເກີດຢູ່ໃນ ຫລື ນອກດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

<u>ມາດຕາ ໑໐</u>. ສັນຊາດຂອງເດັກ ຊຶ່ງ ພໍ່ ຫລື ແມ່ ເປັນພົນລະເມືອງລາວ

ໃນເມື່ອພໍ່ ຫລື ແມ່ຂອງເດັກເປັນພົນລະເມືອງລາວ ໃນເວລາເດັກເກີດ ຈະຖືວ່າເດັກຜູ້ນັ້ນເປັນພົນລະເມືອງລາວ ຖ້າຫາກວ່າ :

໑. ເດັກຜູ້ນັ້ນ ໄດ້ເກີດຢູ່ໃນດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

໒. ເດັກຜູ້ນັ້ນ ໄດ້ເກີດຢູ່ນອກດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແຕ່ໃນເວລານັ້ນ ພໍ່ ແມ່ທັງສອງ ທີ່ມີຢູ່ປະຈຳຢູ່ນອກດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ໃນກໍລະນີທີ່ເດັກຜູ້ນັ້ນ ຫາກໄດ້ເກີດຢູ່ນອກດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສັນຊາດຂອງເດັກ ຈະຖືເອົາຕາມຄຳເຫັນດີຂອງພໍ່ແມ່.

ໃນກໍລະນີ ທີ່ພໍ່ ຫລື ແມ່ຂອງເດັກເປັນພົນລະເມືອງລາວ ແລະ ອີກຜູ້ນຶ່ງ ເປັນຄົນບໍ່ມີສັນຊາດ ໃນເວລາເດັກເກີດ ກໍຈະຖືວ່າ ເດັກຜູ້ນັ້ນ ເປັນພົນລະເມືອງລາວ ໂດຍບໍ່ຂຶ້ນກັບບ່ອນເກີດ.

<u>ມາດຕາ ໑໑</u>. ສັນຊາດຂອງເດັກ ຊຶ່ງ ພໍ່ ແມ່ ເປັນຄົນບໍ່ມີສັນຊາດ

ເດັກທີ່ໄດ້ເກີດຢູ່ໃນດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຊຶ່ງ ພໍ່ ແລະ ແມ່ ເປັນຄົນບໍ່ມີສັນຊາດ ທີ່ມີທີ່ຢູ່ປະຈຳໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ໄດ້ ເຊື່ອມເຂົ້າສັງຄົມວັດທະນະທຳລາວແລ້ວ ກໍຈະຖືວ່າ ເດັກຜູ້ນັ້ນເປັນພົນລະເມືອງລາວ. **(ອ່ານຕໍ່ສບັບໜ້າ)**

---

## ສົນທະນາພຸທສາສນາ

(ຕໍ່ຈາກໜ້າ 21)

ທ່ານອາຈານ ໄດກຸ ຊິວຊິ ກ່າວວ່າ ການທຳງານ ຄືການປະຕິບັດທັມ ຕອນທຳອິດຂ້າພເຈົ້າກໍບໍ່ເຂົ້າໃຈວ່າການເຮັດວຽກເຮັດການແລ້ວຊິປະຕິບັດທັມໄດ້ຢ່າງໃດ ມັນຕ້ອງແບ່ງເວລາຊັ້ນຕວ່າ

ອັນນັ້ນແມ່ນຄວາມຄິດຂອງຊາວບ້ານຄິດກັນເພາະໄປເຂົ້າໃຈວ່າ ການປະຕິບັດທັມ ຄືການນັ່ງສະມາທິແລະເດີນຈົງກົມ, ແຕ່ຕາມຈິງແລ້ວ ການປະຕິບັດທັມ ບໍ່ແມ່ນແຕ່ການນັ່ງສະມາທິເທົ່ານັ້ນ ການປະຕິບັດທັມນັ້ນມີຢູ່ແລ້ວໃນຊີວິດປະຈຳວັນ ໂດຍການເຮັດສະຕິ ກຳໜົດຮູ້ການຂື້ນສເພາະໜ້າຊຶ່ງເປັນທີ່ຕັ້ງສະຕິໃນຂະນະນັ້ນ.

ຝອຍມາຕັ້ງດົນຕັ້ງນານ ວ່າຈະຂຽນແຕ່ເຣື້ອງລັດທິມະຫາຍານ ເລີຍການເປັນການນັ່ງສະມາທິໄປ ອັນນີ້ລະນໍທີ່ເພິ່ນວ່າປາກກາພາໄປ ເອົາໄວ້ສບັບໜ້າຈະຝອຍເຣື້ອງລັດທິ ຫລືນິກາຍມະຫາຍານຕໍ່ .

ອ້າຍທິດ.

# ປະເພນີສູ່ຂວັນ

ໂດຍ...ຈັນທ໌ ອິນທຸພິລາສ (ຕໍ່ຈາກສບັບກ່ອນ)

ໃນຖ້ຽວກ່ອນໄດ້ເວົ້າເຖິງວ່າ ປະເພນີສູ່ຂວັນ ເປັນປະເພນີບູຮານຂອງລາວມາແຕ່ເຫິງນານແລ້ວ ໃນປັດຈຸບັນນີ້ ເປັນປະເພນີຣະດັບປະເທດແລ້ວກໍວ່າໄດ້ຖ້ຽວນີ້ ຈະເວົ້າເຖິງ ການສູ່ຂວັນນັ້ນ ສູ່ໃຫ້ໃຜແດ່ ແລະເພື່ອຫຍັງ ຕໍ່ໄປ.

ຜູ່ທີ່ຖືກສູ່ຂວັນໃຫ້ນັ້ນ ມີຫລາຍຈຳພວກ ທີ່ເປັນຄົນ ກໍມີ ເປັນສັດ ກໍມີ ເປັນວັດຖຸເຄື່ອງໃຊ້ ກໍມີ ເປັນເຄື່ອງກິນ ກໍມີ. ການສູ່ຂວັນກ່ຽວກັບຄົນ ກໍໄດ້ແກ່ການສູ່ຂວັນໃຫ້ແກ່ເດັກນ້ອຍເກີດໃຫມ່ ທີ່ຮ້ອງວ່າ ສູ່ຂວັນອອກກັມ, ສູ່ຂວັນແກ່ຄູ່ບ່າວສາວ ທີ່ຮ້ອງວ່າ ສູ່ຂວັນດອງ, ສູ່ຂວັນເດັກນ້ອຍບໍ່ຢູ່ດີມີແຮງ, ສູ່ຂວັນຜູ່ສວ່າງເຊົາຈາກເຈັບໄຂ້ໄດ້ປ່ວຍ, ສູ່ຂວັນຕ້ອນຮັບ ເຊິ່ງເຮັດແກ່ແຂກຜູ່ມີກຽດ ຫລືທີ່ຮັກແພງມາຢາມ ຫລືມາຮັບຫນ້າທີ່ການ, ສູ່ຂວັນສົ່ງ ເຊິ່ງເຮັດແກ່ຜູ່ທີ່ຈະຈາກໄປໄກສູ່ຖິ່ນອື່ນ ຫລືຖິ່ນເດີມ, ສູ່ຂວັນນາກ ຄືຜູ່ທີ່ຈະລະຄອງຄະຫັດເຂົ້າສູ່ເພດນັກບວດ, ສູ່ຂວັນຂຶ້ນປີໃຫມ່, ສູ່ຂວັນຂຶ້ນເຮືອນໃຫມ່ ; ສູ່ຂວັນແກ່ສັດ ໄດ້ແກ່ສູ່ຂວັນໃຫ້ແກ່ງົວ ແລະຄວາຍ; ສູ່ຂວັນໃຫ້ແກ່ວັດຖຸເຄື່ອງໃຊ້ ເຫັນມີແຕ່ກວຽນ; ສູ່ຂວັນໃຫ້ແກ່ເຄື່ອງກິນ ກໍແມ່ນສູ່ຂວັນເຂົ້າ ຫລືສູ່ຂວັນເລົ້າເຢັຽ.

ການສູ່ຂວັນ ທີ່ພວກເຮົາຊາວອົພຍົບທີ່ຢູ່ໃນປະເທດທີ ໓ ບໍ່ວ່າໃນທະວີບເອີຣົບ ອະເມຣິກາ ຫລື ອົສ-ຕຣາລີ ທີ່ເຮັດກັນຂາດບໍ່ໄດ້ກໍແມ່ນສູ່ຂວັນອອກກັມ ສູ່ຂວັນດອງ ສອງແນວນີ້ຜາກົດວ່າຫລາຍກວ່າຫມູ່ ແຕ່ລະປີ ມີຫລາຍກັມ ຫລາຍດອງ. ນອກນັ້ນກໍມີສູ່ຂວັນຮັບ ສູ່ຂວັນສົ່ງ ສູ່ຂວັນຂຶ້ນປີໃຫມ່ ແລະ ສູ່ຂວັນສວ່າງເຊົາຈາກປ່ວຍໄຂ້, ສູ່ຂວັນນາກນັ້ນ ອາດມີໄດ້ ແຕ່ ແຕ່ລະປີມີຜູ່ບວດຫນ້ອຍ ຈຶ່ງບໍ່ຄ່ອຍຜາກົດວ່າມີການສູ່ຂວັນແກ່ນາກ, ການສູ່ຂວັນນອກນີ້ ແມ່ນບໍ່ມີໂອກາດເຮັດໄດ້ຄື ສູ່ຂວັນຄວາຍ ງົວ ສູ່ຂວັນກວຽນ ແລະ ສູ່ຂວັນເຂົ້າ ເພາະພວກເຮົາບໍ່ມີໂອກາດຈະມີສິ່ງເຫລົ່ານີ້ໄດ້.

ສູ່ຂວັນໃຫ້ແກ່ຄົນແລະສິ່ງດັ່ງກ່າວເພື່ອຫຍັງ ?

ສູ່ຂວັນອອກກັມ ເພື່ອຮັບຂວັນຂອງເດັກອ່ອນ ແລະຮັບຂວັນຂອງແມ່ເດັກນ້ອຍນັ້ນຜູ່ພົ້ນຈາກອັນຕຣາຍອັນໃຫຍ່ຫລວງໃນການອອກລູກແຕ່ລະເທື່ອ , ການສູ່ຂວັນນີ້ ເພິ່ນມັກເຮັດເມື່ອອອກລູກແລ້ວ ຈະຢູ່ກັມ ຫລືບໍ່ຢູ່ກັມກໍຕາມໄດ້ເດືອນນຶ່ງຫລືສອງເດືອນເປັນຢ່າງເຫິງ ຮ້ອງວ່າອອກກັມເດືອນ. ການຢູ່ກັມເປັນເດືອນ ແລ້ວຈຶ່ງອອກນີ້ ຜາກົດວ່າຈະມີມາຫລາຍຮ້ອຍປີແລ້ວ ເພາະໃນຫນັງສືວັນນະຄະດີ ເຣື່ອງສິນໄຊ ທີ່ກ່າວວ່າແຕ່ງໃນສມັຍພຣະເຈົ້າສຸຣິຍະວົງສາທັມມິກະຣາດ ມີອາຍຸໄດ້ ໓໕໐ ປີປາຍມາແລ້ວກໍກ່າວວ່າຢູ່ກັມເປັນເດືອນແລ້ວຈຶ່ງອອກຄືກັນ. ທີ່ເຮັດການສູ່ຂວັນໃຫ້ແກ່ແອນ້ອຍ ແລະແມ່ ກໍເພື່ອຮ້ອງເອົາຂວັນເດັກນ້ອຍທີ່ເກີດໃຫມ່ໃຫ້ມາຢູ່ເນື້ອຢູ່ຄີງ ເພື່ອໃຫ້ອາຍຸຫມັ້ນຂວັນຍືນ ລ້ຽງງ່າຍປາສຈາກໂຣກພັຍ ແລະໃຫຍ່ສູງຈູງຫນ້າ, ສຳລັບຜູ່ແມ່ນັ້ນເມື່ອອອກລູກມົ້ມທ້ອງແລ້ວ ນັບວ່າໄດ້ພົ້ນພັຍອັນໃຫຍ່ຫລວງໃນຊີວິດແຕ່ລະເທື່ອໃນການອອກລູກ ຂວັນຄົງຈະຕົກໃຈຕື່ນທ້ວງ ອາດຈະຫນີພ່າຍ ຈຶ່ງຕ້ອງທຳພິທີຮ້ອງຂວັນ ຜູກແຂນເອົາຂວັນໄວ້ ຫລືໃຫ້ຂວັນຄືນມາຢູ່ນຳເນື້ອນຳຄີງເທົ່ານັ້ນເອງ.

ສູ່ຂວັນນາກ ຄືຜູ່ຈະອອກໄປບວດນັ້ນເພື່ອຈະບໍ່ໃຫ້ຂວັນຕື່ນເຕັ້ນ ແລ້ວຫນີຈາກເນື້ອຈາກຕົວ ໃນເວລາຈະໄດ້ປ່ຽນຈາກເພດຄະຫັດສູ່ເພດນັກບວດ ແລະເພື່ອອວຍຊັຍໃຫ້ພອນໃຫ້ຈເຣີນໃນເພດສົມນະທັງຝ່າຍສຶກສາ ແລະຝ່າຍປະຕິບັດ. ການສູ່ຂວັນແຕ່ງດອງ ນັບວ່າເປັນຂັ້ນຕອນທີ່ສຳຄັນຕອນນຶ່ງຂອງຊີວິດ ເພາະ ເອົາຊີວິດຂອງຄົນສອງຄົນ ແລະຄົນລະເພດ ຄືເພດຊາຍ-ເພດຍິງ ມາຢູ່ຮ່ວມກັນ ອັນນຶ່ງ ສອງຄົນນັ້ນຍັງຄົນລະພໍ່ຄົນລະແມ່ຄົນລະຈິດລະໃຈແລະແຕ່ລະຄົນກໍເປັນທີ່ຮັກແພງ ແລະຫວງແຫນຂອງພໍ່ແມ່ແຕ່ລະຂ້າງ ທັງເປັນຫ່ວງວ່າ ລູກຂອງຕົນຈະເອົາຄວາມເປັນຄົນຊີວິດຄູ່ນັ້ນ ໄປຕລອດຮອດຝັ່ງໄດ້ຫລືບໍ່ ພໍ່ແມ່ທັງສອງຝ່າຍຫມາຍໃຈວ່າຈະໃຫ້ລູກເຕົ້າຂອງຕົນດຳເນີນຊີວິດຄູ່ຜົວເມັຽ

ໄປໃຫ້ດີທີ່ສຸດ ຈເຣີນຮຸ່ງເຮືອງທີ່ສຸດ ຈຶ່ງມີການສູ່ຂວັນຜູກແຂນໃຫ້ ເພື່ອຕ້ອນຂວັນທັງຝ່າຍບ່າວ ແລະສາວໃຫ້ມາຢູ່ຮ່ວມກັນ ທັງຍັງສັ່ງສອນໂດຍຫຍໍ້ ໃນຣິດຜົວ-ຄອງເມັຽ ແລະ ທ້າຍສຸດກໍອວຍພອນໃຫ້ບ່າວສາວທັງຄູ່ ຢູ່ເປັນຜົວເມັຽຢ່າງໝັ້ນແກ່ນດ້ວຍຄວາມສຸກກຸ່ມຊຸ່ມເຢັນແລະຈເຣີນຮຸ່ງເຮືອງດ້ວຍໂພຄະສົມບັດຮ່ວມກັນ.

ສູ່ຂວັນຮັບ ໝາຍເຖິງວ່າມີຜູ່ເດີນທາງມາສູ່ເຮືອນຂອງຕົນ ອາດເປັນລູກເຕົ້າຫລືພໍ່ແມ່ທີ່ຈາກໄປໄກແລ້ວກັບຄືນສູ່ຖິ່ນເດີມ ຫລືອາດເປັນເຈົ້ານາຍຂ້າຣາຊການທີ່ເດີນທາງມາເພື່ອຮັບໜ້າທີ່ການໃນວົງຣາຊການ ໃນທ້ອງຖິ່ນຂອງຕົນ ຫລືອາດເປັນເພື່ອນຮັກແພງ ເດີນທາງມາຢາມຈາກຖິ່ນແດນໄກ ເພື່ອສແດງຄວາມຮັກແພງ ຄວາມນັບຖືຜູກມິດໄມຕຣີ ຈຶ່ງສູ່ຂວັນຜູກແຂນໃຫ້. ສຳລັບສູ່ຂວັນສົ່ງຜູ່ຈະຈາກໄປໄກແລະເຫິງ ອາດຈະເປັນລູກເຕົ້າ ຫລານເຫລນ ທີ່ເດີນທາງໄປສຶກສາຕໍ່ ຫລືໄປເຮັດການໃນຕ່າງຖິ່ນແດນໄກ ຫລືອາດເປັນຂ້າຣາຊການໃນທ້ອງຖິ່ນຕົນຈະຍ້າຍໄປຮັບໜ້າທີ່ການໃນຖິ່ນອື່ນ ຫລືລາງເທື່ອອາດເປັນຂ້າຣາຊການຕ່າງປະເທດທີ່ມາຢູ່ໃນປະເທດຕົນເຫິງແລະເຫັນວ່າ ທ່ານຜູ່ນັ້ນມີຄຸນປໂຍດແກ່ທາງຣາຊການຂອງປະເທດ ຈຶ່ງສູ່ຂວັນຜູກແຂນໃຫ້ ເພື່ອສແດງຄວາມຮັກແພງແລະຜູກໄມຕຣີອັນດີງາມໄວ້. ອັນນີ້ເວົ້າທັງທີ່ຢູ່ໃນເມືອງລາວ ແລະໃນພວກເຮົາທີ່ຢູ່ຕ່າງແດນນີ້.

ຄົນລາວເຮົາເປັນຄົນນັບຖືພຣະພຸທສາສນາເປັນສ່ວນໃຫຍ່ ແລະຖືກສາສນາອົບຮົມນິສັຍຈິດໃຈ ຈາກສາສນາມາເຫິງ ໃຫ້ເປັນຄົນມີຄວາມກະຕັນຍູ ຮູ້ຄຸນຂອງຄົນຂອງສິ່ງມີຄຸນປໂຍດແກ່ຕົນ ເພື່ອເຮັດໃຫ້ຖືກຕາມພຸທພາສິດວ່າ ຄວາມກະຕັນຍູ ຮູ້ຄຸນ ກະຕະເວທີ ຮູ້ຕອບບຸນແທນຄຸນ ເປັຣພື້ນຖານຂອງພວກຄົນດີ ຫລືວ່າ ຄວາມກະຕັນຍູກະຕະເວທີ ເປັນເຄື່ອງໝາຍຂອງຄົນດີ ເຫດນັ້ນນັບແຕ່ເປີງບູຮານມາ ຄົນລາວເຮົາ ບໍ່ແມ່ນແຕ່ຈະຮູ້ແຕ່ຄຸນພໍ່ແມ່ຄຣູບາອາຈານຫລືຮັກແພງແຕ່ແນວທີ່ເປັນຄົນທໍ່ນັ້ນແມ່ນວ່າ ເປັນສັດທີ່ມີຄຸນມີປໂຍດຕໍ່ການປະກອບອາຊີບປະຈຳຊີວິດກໍຮູ້ບຸນຄຸນແລະຮັກແພງ ເມື່ອແລ້ວວຽກປະຈຳຣະດູ ກໍຍັງທຳພິທີສູ່ຂວັນ ຂໍອະນຸຍາດ ຂໍອະພັຍໃນເວລາຕົນໃຊ້ວຽກ ນັ້ນຄືຄວາຍ ຜູ່ເປັນເທື່ອແຮງ ໃນການເຮັດນາຕລອດເວລາ ๓-໔ ເດືອນ ແລະອີກກໍຄື ງົວ ກວຽນນັ້ນໄດ້ຊ່ອຍລາກແກ່ກວຽນ ບັນທຸກສິ່ງຂອງຕ່າງໆຕລອດຣະດູໜາວແລະແລ້ງ ເວັ້ນຢູ່ແຕ່ຍາມຣະດູຝົນ ເມື່ອເຫັນຄຸນປໂຍດຂອງຄວາຍແລະງົວເຫລົ່ານັ້ນ ແລ້ວກໍເຫັນອົກເຫັນໃຈຂອງສັດພາຫະນະເຫລົ່ານັ້ນ ແລະເກີດຄວາມກະຕັຍຍູຕໍ່ການອອກແຮງງານຂອງພວກມັນປີນຶ່ງກໍເຮັດການສູ່ຂວັນໃຫ້ພວກມັນ ຊຶ່ງມັກເຮັດຫລັງຈາກການເກັບກ່ຽວເຂົ້າຂຶ້ນເລົ້າຂຶ້ນເຍັຽແລ້ວ. ບໍ່ແມ່ນແຕ່ຮູ້ຄຸນສັດພາຫະນະເທົ່ານັ້ນທີ່ສຸດແຕ່ເຄື່ອງໃຊ້ທີ່ຕາງເທື່ອແຮງໄດ້ດີ ຄືຍານພາຫະນະອັນໄດ້ແກ່ກວຽນສຳລັບລາກເຂັນຂອງຕ່າງໆ ລາງເທື່ອກໍໄດ້ອາສັຍມັນແກ່ສິນຄ້າໄປຂາຍໄກໆຢ່າງໜ້ອຍກໍໄດ້ເຂັນຟືນມາບ້ານ ຫລືໄປຂາຍເປັນຕົ້ນ , ເຊິ່ງນັບວ່າອຳນວຍຄວາມສດວກແລະຊ່ອຍແຮງໄດ້ຫລາຍບໍ່ແມ່ນຄ່ອຍ ໃຊ້ມາຈຸບຂວບປີກໍເຮັດສູ່ຂວັນໃຫ້ ຫລືບໍ່ດັ່ງນັ້ນຖ້າໃຊ້ມັນໝັ້ນຍືນເຖິງສາມປີຈຶ່ງເຮັດກໍມີ. ພິທີສູ່ຂວັນຄວາຍ-ງົວແລະກວຽນແຕ່ສມັຍກ່ອນ ຈົນຮອດລາວໄດ້ເອກຣາດໃໝ່ໆ ( ປີ ໑໙໔໗) ກໍຍັງມີຜູ່ເຮັດກັນຢູ່ແດ່ ແຕ່ຕໍ່ໆມາ ຜາກົດວ່າຈະເຊົາໆກັນໄປ.

ສ່ວນການເຮັດພິທີສູ່ຂວັນເຂົ້ານັ້ນ ເພິ່ນວ່າເພື່ອສແດງຄວາມໂຄຣົບນັບຖືຮູ້ບຸນຄຸນຂອງນາງໂພສົບ ເຊິ່ງຖືກັນວ່າ ເປັນເຈົ້າແຫ່ງເຂົ້າທັງຫລາຍແລະເບິ່ງແຍງເຂົ້າແລະວ່າເພິ່ນເປັນຜູ່ອຳນວຍຜົນໃຫ້ເຂົ້າແພ່ກໍແພ່ຮວງແລະຍັງພາກັນເຫັນຄຸນຄ່າ ຂອງເຂົ້າທຸກແນວ ທີ່ເປັນອາຫານຫລັກ ລ້ຽງຊີວິດຂອງຄົນທຸກຄອບຄົວ ຈຶ່ງສູ່ຂວັນທັງຢູ່ລານແລະຢູ່ເລົ້າ ເພື່ອໃຫ້ຂວັນເຂົ້າຢູ່ນຳເລົ້ານຳເຍັຽ ເພື່ອວ່າ ກິນຢ່າໃຫ້ບົກ ຈົກຢ່າໃຫ້ລົງ ນັ້ນເອງ.

ດັ່ງກ່າວມາ ຈະເຫັນວ່າລາວເຮົາ ສູ່ຂວັນທັງແກ່ຄົນ-ສັດ ແລະເຄື່ອງໃຊ້ພາຫະນະ ຢ່າງມີຄວາມໝາຍຖ້ຽວນີ້ ໂຈະໄວ້ກ່ອນ ຖ້ຽວໜ້າຈະກ່າວເຖິງຄຳວ່າຂວັນແມ່ນຫຍັງ ເຮັດແນວໃດຈຶ່ງຈະຈົບຈະງາມ.

**( ອ່ານຕໍ່ສບັບໜ້າ )**

# ຄວາມຫລັງຂອງຂ້າພເຈົ້າ

ທ້າວອຸ່ນ ຊະນະນິກອນ

(ຕໍ່ຈາກສບັບກ່ອນ)

## ພົບກັບຝຣັ່ງເສດ

ສອງມື້ຕໍ່ມາ ນາຍພົນຂອງຈີນ ໄດ້ມາພົບ ແລະຂໍເຊີນຂ້າພເຈົ້າໄປພົບຄະນະນາຍທະຫານຝຣັ່ງເສດ ເພື່ອປຶກສາຫາລືກັນທີ່ຄ້າຍທະຫານຈີນ ຂະນະດຽວກັນນາຍພົນຂອງຈີນໄດ້ແຈ້ງໃຫ້ຂ້າພເຈົ້າຮູ້ວ່າ ການປົດອາວຸດກອງທັບຍີ່ປຸ່ນ ໄດ້ເສັດສິ້ນລົງແລ້ວ ແລະ ທະຫານຍີ່ປຸ່ນ ກໍໄດ້ອອກຈາກເມືອງລາວໝົດແລ້ວ ຣັຖບານຝຣັ່ງເສດ ກັບຣັຖບານຈີນ ໄດ້ເຈຣະຈາກັນແລະໄດ້ຕົກລົງກັນວ່າ ໃຫ້ທະຫານຝຣັ່ງເຂົ້າມາປົກຄອງເມືອງລາວພາກເໜືອຕໍ່ໄປ ດັ່ງນັ້ນກອງທັບຈີນຈຶ່ງຈະຖອນຕົວອອກຈາກລາວ ຂະນະນັ້ນແມ່ນປີ ໑໙໔໖ ເມື່ອເປັນເຊັ່ນນີ້ ຂ້າພເຈົ້າກໍຈຳເປັນຕ້ອງຍອມໄປພົບປະ ສົນທະນາກັບນາຍທະຫານຝຣັ່ງເສດ ໃນມື້ຕໍ່ມາ ເມື່ອຂ້າພເຈົ້າສອບຖາມວ່າ ຈະໃຫ້ຂ້າພເຈົ້າເອົາຫົວໜ້າແກວໄປນຳຫລືບໍ ນາຍພົນຈີນກໍຕອບວ່າ ພວກຫົວໜ້າແກວກໍໄດ້ຮັບເຊີນໄປພ້ອມກັນ ແລະເວລາດຽວກັນ ແຕ່ຄົນລະບ່ອນ ບໍ່ແມ່ນບ່ອນດຽວກັນ

ເມື່ອໄດ້ປຶກສາຫາລືກັນກັບຫົວໜ້າແກວແລ້ວ ກໍໄດ້ຮັບຄຳຢືນຢັນຈາກເຂົາວ່າ ຈີນໄດ້ຍອມໃຫ້ຝຣັ່ງເສດກັບຄືນມາມີອຳນາດເໜືອອິນໂດຈີນອີກເທື່ອນຶ່ງ ມັນເປັນເຫດສຸດວິສັຍທີ່ພວກເຮົາຈະແຍກກັນທຳການຕໍ່ສູ້ກັບຝຣັ່ງເສດ ພວກແກວກໍຈະຕໍ່ສູ້ ກັບຝຣັ່ງເສດຕໍ່ໄປ ຂ້າພເຈົ້າເອງເຫັນວ່າຮ້າຍດີຢ່າງໃດກໍຂໍໃຫ້ໄດ້ພົບປະເຈຣະຈາກັນເສັຽກ່ອນ ດັ່ງນັ້ນເຊົ້າຕໍ່ມາ ພວກເຮົາຊຶ່ງປະກອບດ້ວຍທ້າວພູມີ ໜໍ່ສວັນ ທ້າວອຸ ວໍຣະວົງ ແລະ ຜູ້ຕິດຕາມອີກທ້າ ຫົກຄົນ ກໍເດີນທາງໄປທີ່ຄ້າຍທະຫານຈີນ ຊຶ່ງທະຫານຝຣັ່ງເສດນັ່ງຖ້າຢູ່ກ່ອນແລ້ວພ້ອມກັບນາຍພົນ ແລະນາຍທະຫານຈີນ ພໍພວກເຮົາໄປເຖິງ ນາຍພົນຈີນພຽງແຕ່ແນະນຳວ່າ ຫົວໜ້າລາວເທົ່ານັ້ນ ບໍ່ໄດ້ບອກຊື່ສຽງຮຽງນາມແຕ່ຢ່າງໃດ ສ່ວນຝ່າຍຝຣັ່ງເສດນັ້ນ ເຂົາແນະນຳໂຕເອງວ່າ ພັນໂທ ແກວເວີະເກີກ ພັນຕຣີ ໂວເຊີເຣ ແລະ ອີກຄົນນຶ່ງເປັນນາຍທະຫານຊັ້ນນ້ອຍ

ການເຈຣະຈາກັນດຳເນີນໄປຢ່າງອິສຣະເສຣີແລະເປີດເຜີຍ ເພາະມີແຕ່ລາວກັບຝຣັ່ງເທົ່ານັ້ນ ບໍ່ມີທະຫານແກວຮ່ວມຢູ່ນຳຈຶ່ງເວົ້າກັນໄດ້ເຕັມປາກ ນອກຈາກນັ້ນນາຍພົນຈີນທີ່ນັ່ງເປັນປະທານກໍຖ້າແຈກເບັຽໃຫ້ດື່ມຕລອດເວລາ ນະທີ່ນີ້ ຂ້າພເຈົ້າຂໍຫຍິບຍົກເອົາແຕ່ໃຈຄວາມສຳຄັນໆເທົ່ານັ້ນຂຶ້ນມາເວົ້າ ພວກເຮົາກັບຝຣັ່ງເສດ ຕົກລົງກັນວ່າ ຈະອະນຸຍາດໃຫ້ຝຣັ່ງເສດເຂົ້າມາໃນເມືອງສວັນນະເຂດໄດ້ ແຕ່ຕ້ອງໃຫ້ພວກເຮົາໄດ້ພົບກັບຄົນລາວທີ່ຢູ່ກັບຝຣັ່ງເສດກ່ອນ ເຊັ່ນເຈົ້າບຸນອຸ້ມ ນະຈຳປາສັກ, ທ້າວເຫລື່ອມ ອິນສີຊຽງໃໝ່ ຫລື ທ້າວໂງ່ນ ຊະນະນິກອນ ນ້ອງຊາຍຂອງຂ້າພເຈົ້າ ເປັນຕົ້ນ ພັນໂທ ແກວເວີເກີກ ຕອບຂ້າພເຈົ້າວ່າ ເຈົ້າບຸນອຸ້ມໄປໄຊງ່ອນ ຄົງບໍ່ສາມາດພົບກັນໄດ້ ຄົງພົບໄດ້ແຕ່ທ້າວເຫລື່ອມ ອິນສີຊຽງໃໝ່ ແລະ ທ້າວໂງ່ນ ຊະນະນິກອນ ເທົ່ານັ້ນ ແລະ ທັງສອງຝ່າຍຕົກລົງກັນວ່າ ຈະພົບກັນອີກໃນມື້ອື່ນປະມານ ໙ ໂມງແລງ ທີ່ເກົ່າ

ເວລາພວກເຮົາລາຈາກ ຫົວໜ້າຝ່າຍຝຣັ່ງເສດຖາມຂ້າພເຈົ້າວ່າ " ເປັນຫຍັງພວກທ່ານຈຶ່ງຕົກລົງໃຫ້ພວກເຮົາເຂົ້າສວັນນະເຂດງ່າຍໆແບບນີ້ ພວກທ່ານຈະບໍ່ຖາມນາຍຂອງພວກທ່ານກ່ອນຫລືວ່າທ່ານຈະຍິນຍອມຕາມຄຳຕົກລົງພວກທ່ານຫລືບໍ່ " ຂ້າພເຈົ້າຕອບວ່າ " ເມື່ອຂ້າພເຈົ້າຕົກລົງແລ້ວ ນາຍຂ້າພເຈົ້າທີ່ວຽງຈັນຄົງບໍ່ຂັດຂ້ອງ ເພາະເພິ່ນໄດ້ມອບອຳນາດໃຫ້ພວກເຮົາແລ້ວ " ຫົວໜ້າຄະນະຝຣັ່ງເສດສວນມາທັນທີວ່າ ບໍ່ແມ່ນນາຍຂອງພວກທ່ານທີ່ວຽງຈັນ ຂ້າພເຈົ້າໝາຍເຖິງນາຍຂອງພວກທ່ານຫລືຫົວໜ້າພວກທ່ານທີ່ສວັນນະເຂດນີ້ ຄື ທ້າວອຸ່ນ ຈະເຫັນດີກັບພວກທ່ານຫລືບໍ " ທ້າວພູມີ ໜໍ່ສວັນຊີ້ມືມາທີ່ຂ້າພເຈົ້າ ແລ້ວເວົ້າວ່າ "ທ່ານຜູ້ນີ້ ຄືທ້າວອຸ່ນ"

ທິວຫນ້າຄະນະຝຣັ່ງເສດຕິກສະເງີ້ ແລ້ວເວົ້າວ່າ "ຕາມສຽງເລົ່າລືກັນເຂົາວ່າ ທ້າວອຸ່ນ ເປັນຄົນໂຫດຮ້າຍຫຼາຍ ແຕ່ເມື່ອພົບໂຕຈິງແລ້ວ ຮູ້ສຶກວ່າ ທ້າວອຸ່ນ ເປັນຄົນມີສະຕິປັນຍາ ເວົ້າຈາກໍເຂົ້າໃຈກັນ ດ້ວຍເຫດດ້ວຍຜົນ"ແລ້ວ ເຂົາກໍຍື່ນມືມາໃຫ້ຂ້າພເຈົ້າຈັບ ຂ້າພເຈົ້າກໍຕອບສນອງດ້ວຍດີ ແຕ່ພໍຂ້າພເຈົ້າຍື່ນມືໄປໃຫ້ພັນຕຣີໂວເຊີເຣ ຈັບ ກໍຖືກປະຕິເສດ ໂດຍກ່າວວ່າ ຂ້າພເຈົ້າບໍ່ຂໍຈັບມືທີ່ເປື້ອນເລືອດຂອງອາຊຍາກອນ ແລ້ວເຂົາກໍຫັນຫລັງໃຫ້ຂ້າພະເຈົ້າພ້ອມກັບເວົ້າຕໍ່ໄປວ່າ " ແລ້ວພວກເຮົາຈະຕ້ອງພົບກັນອີກດ້ວຍອາວຸດ " ຂ້າພເຈົ້າຕອບຮັບທັນທີວ່າ

**"ພ້ອມສເມີ ເມື່ອໃດກໍໄດ້"**

ຂ້າພເຈົ້າມາຮູ້ຕາມພາຍຫລັງວ່າ ການທີ່ນາຍທະຫານຄົນນັ້ນຄຽດແຄ້ນຂ້າພເຈົ້າຫລາຍນັ້ນກໍເພາະວ່າ ລູກນ້ອງຂອງເຂົາຖືກຕັດຄໍ ເມື່ອ ສອງ-ສາມມື້ກ່ອນນັ້ນເອງ ແລະ ມີຄົນໄປຣາຍງານເຂົາວ່າ ເປັນເພາະຄຳສັ່ງຂອງຂ້າພເຈົ້າ ລູກນ້ອງເຂົາຈຶ່ງຖືກທາຣຸນຢ່າງນັ້ນ

<u>ອົພຍົບປະຊາຊົນອອກຈາກສວັນນະເຂດ</u>

ພໍກັບໄປຮອດຄ້າຍ ພວກເຮົາກໍໄດ້ປະຊຸມກັນທັນທີ ແລະລັບສເພາະເພື່ອພິຈາຣະນາເຫດການໃຫ້ຮອບຄອບ ພວກເຮົາມີຄວາມເຫັນວ່າ ການທີ່ພວກເຮົາຍອມແຕ່ຝ່າຍດຽວໃຫ້ທະຫານຝຣັ່ງເສດເຂົ້າເມືອງຄືງເປັນອັນຕະລາຍຮ້າຍແຮງຫລາຍ ເພາະອາດມີການຕໍ່ສູ້ດ້ວຍອາວຸດໄດ້ ທັງນີ້ເພາະພວກແກວເຂົາບໍ່ຍອມ ຈຶ່ງອາດມີການຣົບກັນກໍໄດ້ ຂ້າພເຈົ້າຈຶ່ງປະກາດໃຫ້ປະຊາຊົນຮູ້ຄວາມຈິງແລະແນະນຳໃຫ້ພາກັນອົພຍົບຫລົບໄພໄປຢູ່ມຸກດາຫານຊົ່ວຄາວກ່ອນ ເມື່ອເຫດການກັບຄືນສູ່ສະພາວະປົກກະຕິແລ້ວຈຶ່ງຄ່ອຍກັບມາຫາບ້ານເຮືອນຂອງຕົນ

ເມື່ອໄດ້ຮັບຄຳແນະນຳເຊັ່ນນີ້ ປະຊາຊົນກໍພາກັນປະຕິບັດຕາມ ຕລອດວັນໃນວັນນັ້ນ ພວກເຮົາເຫັນຊາວສວັນນະເຂດນັ່ງເຮືອຂ້າມຂອງໄປມຸກດາຫານບໍ່ຂາດສາຍ ມີທັງລູກເລັກເດັກນ້ອຍ ເປັດໄກ່ ຫມູ ຫມາ ສ່ວນພວກແກວເຂົາໄດ້ອົພຍົບຄອບຄົວຂອງພວກເຂົາຄືກັນໂດຍສ່ວນນຶ່ງຂຶ້ນແມ່ນ້ຳຂອງໄປເມືອງທ່າແຂກ ແລະ ອີກສ່ວນນຶ່ງຂ້າມໄປມຸກດາຫານຄືກັນ ຈາກນັ້ນ ພວກເຮົາກໍຕຽມການປ້ອງກັນຕົວທັງສອງດ້ານ ຄືດ້ານນຶ່ງ ຕຽມໄວ້ຮັບມືພວກແກວ ຖ້າຫາກພວກເຂົາຫລອນມາຕີພວກເຮົາເພາະພວກເຂົາເສັຽໃຈທີ່ພວກເຮົາຕົກລົງກັນກັບຝຣັ່ງເສດແລະອີກດ້ານນຶ່ງ ຖ້າປ້ອງກັນໃນກໍຣະນີທີ່ທະຫານຈີນອາດຊ່ວຍເຫລືອທະຫານຝຣັ່ງເຂົ້າມາຕີພວກເຮົາກໍໄດ້ ຄືນນັ້ນພວກເຮົາໄດ້ປຽນແນວປ້ອງກັນໃຫມ່ຫມົດ ພໍເຖິງເວລາກາງຄືນ ເມືອງສວັນນະເຂດກໍເປັນເມືອງຮ້າງ ບໍ່ມີແສງໄຟ ບໍ່ມີແມ້ແຕ່ສຽງລົມກັນ ຂ້າພເຈົ້າເຂົ້ານອນປະມານ ໑໔ ໂມງ ພໍເຊື່ອບໆເທົ່ານັ້ນ ທ້າວພູມີ ຫນໍ່ສວັນ ກໍເຂົ້າມາປຸກຂ້າພເຈົ້າໃຫ້ຕື່ນຂຶ້ນ ແລະຣາຍງານວ່າ ທະຫານແກວຍົກກຳລັງອອກຈາກເມືອງຫມົດແລ້ວ ພວກເຂົາພາກັນລົງເຮືອພາຍຂຶ້ນໄປທາງເຫນືອນ້ຳ ຂະນະນີ້ມີແຕ່ພວກເຮົາເທົ່ານັ້ນ ຈະເຮັດຢ່າງໃດດີ ເມື່ອພິຈາຣະນາເຫດການແລະສະພາບພູມິປະເທດແລ້ວ ຂ້າພເຈົ້າກໍສັ່ງໃຫ້ຖອນກຳລັງໃນເວລາກາງຄືນນັ້ນເອງ ໄປຢູ່ທິວບ້ານມຸກດາຫານ

ຖິ້ມເມືອງສວັນນະເຂດໄວ້ໃຫ້ທະຫານຈີນ.

ທີ່ຂ້າພເຈົ້າຖິ້ມເມືອງສວັນນະເຂດນັ້ນກໍເພາະວ່າພວກເຮົາມີກຳລັງນ້ອຍ ອາວຸດຍຸທພັນກໍບໍ່ພຽງພໍ ຖ້າຈະຣົບກັນແລ້ວຢ່າງຫລາຍກໍບໍ່ເກີນນຶ່ງຊົ່ວໂມງ ພວກເຮົາກໍຈະເຫມົດລູກປືນ ແລ້ວພວກເຮົາກໍຈະຫນີຂ້າເສິກໄປບໍ່ພົ້ນ ເພາະແມ່ນ້ຳຂອງໃນຣະດູແລ້ງທີ່ຫນ້າເມືອງສວັນນະເຂດນັ້ນມີຫາດຊາຍກວ້າງປະມານສອງຮ້ອຍແມດ ແລະ ທາງຫນີກໍມີແຕ່ຫນີຂ້າມຂອງໄປມຸກດາຫານເທົ່ານັ້ນ ໃນຂະນະທີ່ແລ່ນຫນີຂ້າເສິກຜ່ານຫາດຊາຍນັ້ນ ພວກເຮົາຈະເປັນເປົ້າລູກປືນໃຫ້ສັດຕຣູຍິງເອົາ ຢ່າງສດວກສບາຍ ພາກັນຕາຍຢູ່ຫາດຊາຍນັ້ນເອງ ດັ່ງນັ້ນ ຂ້າພເຈົ້າຈຶ່ງຕັດສິນໃຈຖິ້ມສວັນນະເຂດໃນຄືນນັ້ນທັນທີ

ການຖອນໂຕຂອງພວກເຮົາເຮັດເປັນຂັ້ນຕອນດັ່ງນີ້ ກ່ອນອື່ນພວກເຮົາສັ່ງຖອນທະຫານອອກຈາກແນວປ້ອງກັນ ແລະຂ້າມໄປສູ່ດອນກາງນ້ຳຫນ້າເມືອງສວັນນະເຂດເພື່ອຄຸ້ມກັນຫນ່ວຍອື່ນທີ່ຈະຖອຍຕາມໄປ ຫນ່ວຍສຸດທ້າຍທີ່ຈະອອກຈາກສວັນນະເຂດ ກໍຄື ຂ້າພເຈົ້າເອງ ທ້າວພູມີ ຫນໍ່ສວັນ ພ້ອມດ້ວຍກອງເສນາທິການຂອງພວກເຮົາ ຂ້າພເຈົ້າເອງ ໄດ້ໄປກວດເບິ່ງແນວປ້ອງກັນຂອງພວກເຮົາທຸກດ້ານ ເມື່ອໄປເຖິງຫນ່ວຍປືນຄົກ ທີ່ຕັ້ງຢູ່ບໍຣິເວນບ້ານຂອງທ່ານເຣສີດັງ ຂ້າພເຈົ້າກໍເຫັນທ້າວຄຳອ້ວນ ຣັຕຕະ



<ອ່ານຕໍ່ຫນ້າ 19>

# ເມືອງລາວໃນປັດຈຸບັນ

ໃນສບັບແລ້ວນີ້ ເຮົາໄດ້ນຳເອົາລາຍຊື່ ສະມາຊິກ ກົມການເມືອງ ຂອງພັກປະຊາຊົນປະຕິວັດລາວ ແລະລາຍຊື່ຂອງຄະນະຣັຖບານ ແຫ່ງປະເທດ ສປປລ ມາລົງໃຫ້ທ່ານໄດ້ຮູ້ໄດ້ເຫັນວ່າໃຜເປັນໃຜ ນອກຈາກ ຄະນະຣັຖມົນຕຣີດັ່ງກ່າວນັ້ນແລ້ວ ໃນກົນໄກການບໍຣິຫານງານຂອງປະເທດ ສປປລ ຍັງແບ່ງໜ້າທີ່ຮັບຜິດ ຊອບອອກໄປເປັນຫລາຍຜແນກ ດັ່ງຕໍ່ລົງໄປນີ້ :

## Central Committee Boards

### Foreign Relations Board (International Department)

| | | |
|---|---|---|
| Chief: | Phoun Sipaseut | Sep 87 |
| First Deputy Chief: | Thongsavat Khaikhamphithoun | Jun 88 |
| Deputy Chiefs: | Inpong Khai-gnavong | Mar 88 |
| | Khamphai Boupha | May 88 |
| | Soulivong Phasitthidet | Jun 88 |

### Organizational Board

| | | |
|---|---|---|
| Chief: | Saman Vi-gnaket. Lt Gen | Feb 88 |
| Deputy Chiefs: | Bouaphim | Jun 85 |
| | Vilaivan Phomhe | Jul 86 |
| Member: | (Ngi Singpaseut) | Oct 87 |

### Party-State Inspection Board

| | | |
|---|---|---|
| Member: | Komma | Jan 88 |

### Propaganda & Training Board

| | | |
|---|---|---|
| Chief: | Somlat Chanthamat | Apr 88 |
| Deputy Chiefs: | Chaleun Yiapaoheu | Oct 87 |
| | Khamma Phomkong | Nov 87 |
| | Son Khamvanvongsa | Jun 88 |
| | Sopha Khotphouthon | Oct 87 |

### Proselytizing & Front Board

| | |
|---|---|
| Chief: | Bolang Boualapha |
| Deputy Chief: | Ounheuan Phounsavat |

**Higher Party School**

| | | |
|---|---|---|
| Director: | Sileua Bounkham | Feb 88 |
| Deputy Director: | Viangsai Solavit | Jan 88 |
| Representative | Boualai Phongsa | Feb 88 |

**Children's Committee**

| | | |
|---|---|---|
| Chairman: | Bounthavi Gnanliachan | Mar 78 |

**Commission for the Study of the History of the LPRP**

| | | |
|---|---|---|
| Chairman: | Sisana Sisan | Jun 88 |
| Vice Chairmen: | Khamphan Vilachit | Jun 88 |
| | Ouanheuan Phounsavat | Jun 88 |

**Control Commission**

| | | |
|---|---|---|
| Chairman: | Maichantan Sengmani | Apr 88 |
| Vice Chairman: | Loun Chaksouvong, Mrs | Jul 87 |
| | Ounla Sai-gnasan | Sep 87 |

**Office of the LPRP CC**

| | | |
|---|---|---|
| Office Director: | | |
| Deputy Director: | Khambon Keokinnali (acting head) | Nov 87 |

**Young Pioneer's Department**

| | | |
|---|---|---|
| Chief: | Vansi Onmanivan | Nov 87 |

24 / VII
ຫ້າມຈຳໜ່າຍ

(ອ່ານຕໍ່ສະບັບໜ້າ)

# ຄວາມຫລັງ

(ຕໍ່ຈາກໜ້າ 17)

ນະວົງ ນອນກອດປືນຄົກໂກນຄອກາຢູ່ ຈຶ່ງປຸກໃຫ້ຕື່ນຂຶ້ນມາຮັບຄຳສັ່ງໃຫ້ຖອນໂຕ ທ້າວຄຳອ້ວນ ຣັຕນະວົງ ຊຶ່ງເວລານັ້ນ ຄົງມີອາຍຸປະມານ ໑໗-໑໘ ປີ ກໍແບກປືນຄົກຂອງເຂົາຂຶ້ນບ່າ ແຕ່ຍົກຈັ່ງໃດກໍບໍ່ຂຶ້ນ ສິງໃສຈະເປັນຍ້ອນຍັງເຫງົານອນຢູ່ ຂ້າພເຈົ້າຈຳໄດ້ວ່າ ໄດ້ຊ່ອຍຍົກປືນຄົກໃສ່ບ່າໃຫ້ເຂົາ ພາບນັ້ນ ຍັງປະທັບໃຈຂ້າພເຈົ້າຕລອດມາ ເພາະສແດງເຖິງຄວາມກະຕືລືລົ້ນຂອງຄົນລາວທຸກຄົນ ແມ້ແຕ່ເດັກຂນາດນັ້ນຍັງໄດ້ທຸ້ມເທກຳລັງສຸດຂີດເພື່ອອຸດົມການ ເພື່ອກອບກູ້ເອກຣາດ ຂອງຊາດບ້ານເມືອງເຮົາ ຄວາມເອົາໃຈໃສ່ ແລະ ຄວາມເສັຽສລະແບບນີ້ ເຮົາຈະບໍ່ເຫັນກັນອີກແລ້ວ

(ອ່ານຕໍ່ສະບັບໜ້າ)

# ສືບທະມາພຸທສາສນາ

ໂດຍ...ອ້າຍທິດ

## ພຸທສາສນາ ມະຫາຍານ

ພຸທສາສນາ ກໍປຽບເໝືອນດັ່ງຕົ້ນໂພໃຫຍ່ຕົ້ນນຶ່ງ ຊຶ່ງຕົ້ນໂພ ເມື່ອຈເຣີນເຕີບໂຕຂຶ້ນມາ ຍ່ອມແຜ່ກິ່ງກ້ານ ສາຂາອອກໄປຫລາຍກິ່ງຫລາຍງ່າ ແຕ່ກໍຍັງອາໃສກົກຫລືຕົ້ນຕໍອັນດຽວກັນຢູ່.

ເຮົາຮູ້ຈັກພຸທສາສນາກັນແບບໃດ ? ຄໍາວ່າ ພຸທສາສນານີ້ມີຄວາມໝາຍກໍາກວມ ເລິກແລບ ແລະ ເປັນໜ້າເຈັບຫົວ ເພາະເຫັນມີປຶ້ມອ່ານກ່ຽວກັບພຣະພຸທສາສນາມີແຕກຕ່າງກັນຫລາຍແບບ ໂຕຢ່າງ ພຸທສາສນາໃນປະເທດລາວ, ພຸທສາສນາໃນປະເທດໄທຍ,ພຸທສາສນາໃນປະເທດທິເບດ, ພຸທສາສນາໃນສຣີລັງກາ, ພຸທສາສນາໃນປະເທດຈີນ, ພຸທສາສນາໃນຍີ່ປຸ່ນ ແລະ ພຸທສາສນາໃນປະເທດພະມ້າ ເຫລົ່ານີ້ເປັນຕົ້ນ ແລ້ວຄົນເຮົາເປັນຜູ່ມາແບ່ງແຍກວ່າ ພຸທສາສນາແຫ່ງປະເທດນັ້ນແຫ່ງປະເທດນີ້ເຕັມໄປໝົດ ແລ້ວຄົນເຮົາເອົາອັນໃດມາແຍກວ່າອັນໃດຖືກ ອັນໃດຜິດ ເມື່ອເຮົາໄດ້ອ່ານ ແລະວິຈັຍເບິ່ງຄັກໆແລ້ວ ກໍເຫັນວ່າ ເຂົາເອົາ ວັທນະທັມຂອງປະເທດນັ້ນໆ ມາຜສົມກົມກືນເຂົ້າກັບພຣະພຸທສາສນາ ເຮັດໃຫ້ພຣະພຸທສາສນາ ປ່ຽນຮູບ ປ່ຽນຮ່າງ ຈົນກາຍເປັນພຸທສາສນາແບ່ງແຍກຕ່າງໆໄປ ຈົນບໍ່ຮູ້ວ່າ ພຸທສາສນາທີ່ແທ້ຈິງນັ້ນມັນຢູ່ໃນປະເທດໃດແທ້.

ແຕ່ຕາມຄວາມເປັນຈິງແລ້ວ ການທີ່ແບ່ງແຍກປະເທດນັ້ນປະເທດນີ້ນັ້ນ ເປັນແຕ່ພຽງເປືອກນອກຂອງພຣະພຸທສາສນາເທົ່ານັ້ນ ເພາະເຂົາເອົາໄປພອກ ໄປຫຸ້ມຫໍ່ຕໍ່ກັນມາຫລາຍສັດຕະວັດ ຈົນເປືອກມັນໜາ ຢ່າງໃນປະເທດທິເບດ ມີການເຕັ້ນຣະບໍາໄລ່ຜີ ໃສ່ຫົວໂຂນເປັນຕາໜ້າຢ້ານ ເພື່ອຂັບໄລ່ຜີ ອັນນີ້ເຂົາກໍເອີ້ນກັນວ່າ ພຸທສາສນາ ຄືກັນ ພຸທສາສນາເຕັ້ນລໍາໄລ່ຜີ ທ່ານຜູ່ອ່ານຄຶດເອົາກໍແລ້ວກັນ ແບບນີ້ມັນຊິບໍ່ໃຫ້ເຈັບຫົວວິນຫົວໄດ້ຈັ່ງໃດ.

ຕາມຈິງແລ້ວ ທີ່ແຕ່ລະປະເທດ ປະຕິບັດ ແລະ ນັບຖືມັນກໍເປັນໄປຕາມ ວັທນະທັມຂອງປະເທດນັ້ນໆເທົ່ານັ້ນເອງ ແຕ່ ແກ່ນແທ້ຂອງ ພຣະພຸທສາສນານັ້ນແມ່ນອັນດຽວກັນ.

ຂໍມາເວົ້າສາຂານຶ່ງ ຂອງພຣະພຸທສາສນານີ້ກ່ອນ ຄື ລັດທິ ມະຫາຍານ ນີ້ເກີດຂຶ້ນມາ ແບບໃດ ເປັນຫຍັງຈຶ່ງມີມະຫາຍານ ?

ຄືພາຍໃນ ໑໐໐ ປີທໍາອິດ ຫລັງຈາກພຣະພຸທເຈົ້າ ປະຣິນິພພານ ພຣະພຸທສາສນາ ມີແບບດຽວ ຄືຕາມທີ່ພຣະເຖຣະມີພຣະມະຫາກັສສປະເປັນຕົ້ນ ໄດ້ປະຊຸມກັນທໍາສັງຄະຍານາ ຄືລວບລວມຄໍາສັ່ງສອນຂອງພຣະພຸທເຈົ້າເປັນໝວດເປັນໝູ່ ໂດຍມີພຣະອານົນ ຊຶ່ງເປັນຜູ່ຊົງຈໍາພຸທທະວັຈນະຢ່າງດີຍິ່ງເປັນຜູ່ທົບທວນພຣະທັມ ພຣະອຸບາລີ ຊຶ່ງໄດ້ຮັບຍົກຍ້ອງຈາກພຣະພຸທເຈົ້າວ່າ ເປັນຜູ່ເລີດໃນທາງຊົງຈໍາພຣະວິນັຍ ເປັນຜູ່ທົບທວນພຣະວິນັຍ ແລ້ວສູດເລົ່າຈື່ຈໍາກັນສືບມາ ໂດຍແບ່ງສໍານັກທ່ອງຈໍາກັນເປັນສໍານັກໆໄປ ຊ່ອຍກັນທ່ອງຈໍາພາກຕ່າງໆສັ່ງສອນສິດສືບມາ ຄໍາວ່າ "ເຖຣະວາດ" ຊຶ່ງແປວ່າ "ວາທະຂອງພຣະເຖຣະ" ອັນເປັນຊື່ນິກາຍດັ້ງເດີມ ມາປາກົດ ຮຽກຂານກັນເມື່ອມີນິກາຍອື່ນໆແຕກແຍກອອກໄປແລ້ວ ເພື່ອຈະໄດ້ຮູ້ວ່າຢ່າງໃດເປັນພຸທສາສນາແບບໃດ.

ເມື່ອພົ້ນ ໑໐໐ ປີ ພາຍຫລັງ ພຸທທະປະຣິນິພພານ ພວກພິກສຸວັຊຊີບຸຕ(ລູກຫລານຊາວແຄວ້ນວັຊຊີ)ປະມານນຶ່ງໝື່ນອົງ(໑໐,໐໐໐) ຖືວິນັຍຍ່ອນຍານຈາກທີ່ບັນຍັດໄວ້ສິບ(໑໐)ປະການ ພຣະເຖຣະທີ່ເຫັນແກ່ພຣະທັມວິນັຍ ຈຶ່ງປະຊຸມກັນທໍາສັງຄາຍະນາຄັ້ງທີ ໔ ຂຶ້ນເພື່ອຊໍາຣະເຣື່ອງທີ່ຜິດນີ້ ປະກາດບໍ່ໃຫ້ປະພຶດຕໍ່ໄປ ພິກສຸວັຊຊີບຸຕ ຈຶ່ງແຍກໄປຕັ້ງນິກາຍໃໝ່ຂຶ້ນ ຊື່ວ່າ "ມະຫາສັງຄິກະ" ແປວ່າ"ພວກຫລາຍ" ເຖິງວ່າ ຈະຍັງບໍ່ນັບວ່າເປັນມະຫາຍານໂດຍກົງ ແຕ່ກໍນັບວ່າເປັນຕົ້ນຕໍແຫ່ງການ ແຕກແຍກຈາກຝ່າຍເຖຣະວາດ ມາເປັນມະຫາຍານ ໃນກາລຕໍ່ມາ

ໃນກາລຕໍ່ມາ ເມື່ອລັດທິມະຫາຍານໄດ້ເຂົ້າໄປສູ່ປະເທດຈີນ, ເກົາຫລີ ແລະ ຍີ່ປຸ່ນ ແລ້ວໄດ້ແຕກໜໍ່ ແຕກແຫນງອອກໄປອີກປະມານ ໖໐ ນິກາຍ ໄດ້ເກີດເຈົ້າລັດທິສຳຄັນຂຶ້ນມາ ທັງໄປຈາກອິນເດັຽ ແລະ ເກີດຂຶ້ນໃນປະເທດຈີນເອງ

ປະມານ ພ.ສ. ໑໐໗໕ ມີປຣາຊຊາວອິນເດັຽທ່ານນຶ່ງ ຮູ້ຈັກກັນໂດຍທົ່ວໄປວ່າ " ພຣະໂພທິທັມ " ຈີນເອີ້ນເພິ່ນວ່າ "ຕາໂມ" ຍີ່ປຸ່ນເອີ້ນວ່າ "ທາຣຸມາ" ໄດ້ເດີນທາງເຂົ້າໄປໃນປະເທດຈີນ ຊຶ່ງຂະນະນັ້ນ ນິກາຍມະຫາຍານ ໄດ້ຂຍາຍໄປຢ່າງກວ້າງຂວາງແລ້ວ

ພຣະໂພທິທັມ ຄືປະຣະມາຈານແຫ່ງ ນິກາຍເຊັນ ເພິ່ນເປັນພຣະຣາຊໂອຣົດອົງນຶ່ງ ແຫ່ງແຄວັ້ນຄັນທາຣະຣາສ ໃນເວລາຍັງນ້ອຍ ເຄີຍທຳສະມາທິ ເຂົ້າຊານສະມາບັດຕໍ່ໜ້າສົບຂອງພຣະຣາຊບິດາ ຕິດຕໍ່ກັນເຖິງ ໗ ມື້ ຊຶ່ງສແດງໃຫ້ເຫັນ ເຖິງຄວາມເປັນຜູ້ມີປັນຍາສາມາດມາຕັ້ງແຕ່ຍັງນ້ອຍ ຕໍ່ມາ ໄດ້ສຶກສາທັມມະກັບພຣະເຖຣະອົງນຶ່ງ ນາມວ່າ ພຣະປຣັຊຍາຕາຣະ ແລະໄດ້ບັນລຸທັມໃນທີ່ສຸດ

ທ່ານໂພທິທັມ ໄດ້ນັ່ງເຂົ້າຊານຢູ່ນະ ພູເຂົາຊົ່ງແຫ່ງຣັຖເວ່ ໃນມີນທິນຣິກກີຣົນ ເປັນເວລາເຖິງ ໗ ປີ ຕໍ່ມາໃນສຖານທີ່ແຫ່ງນີ້ ໄດ້ກາຍເປັນວັດໃນພຣະພຸທສາສນາຂຶ້ນມີນາມວ່າ "ວັດສ້ຽວລິ້ມຍີ້"

ໃນຣະຍະ ໗ ປີ ເພິ່ນໄດ້ປັບປຸງແບບວິທີຄຳສອນຂອງພຣະພຸທສາສນາ ໃຫ້ສອດຄ່ອງກົມກືນກັບຫລັກສັດຈະທັມຂອງລັດທິ "ເຕົາ" ຮຽກວິທີໃໝ່ນີ້ວ່າ "ເຊັນ" ຫລືນິກາຍ ບັນລຸທັມທີທັນໃດ ລັດທິເຊັນ ເປັນວິທີປະຕິບັດທັມທີ່ເປັນທາງລັດຕັດຕົງເຂົ້າເຖິງ ພຸທທະ ການບັນລຸທັມແບບນີ້ເປັນການບັນລຸດ້ວຍ ປັນຍາ ຮຽກວ່າ " ປັນຍາວິມຸຕິ"

ພຸທບໍຣິສັດຊາວຈີນຍົກຍ້ອງນັບຖືເພິ່ນເປັນພຣະສັງຣາດ ອົງທຳອິດແຫ່ງນິກາຍເຊັນ ຕຳແໜ່ງນີ້ ໄດ້ສືບຕໍ່ກັນມາເຖິງ ໖ ຊົ່ວຄົນ ອົງສຸດທ້າຍຄື "ພຣະເວ່ຍຫລ່າງ" ຊຶ່ງເປັນອົງທີ ໖ ຈາກນັ້ນກໍບໍ່ມີຜູ້ສືບທອດຕໍ່ມາອີກເລີຍ

*ເຊັນ ຄືຫຍັງ ?* ສອດຄ່ອງກົມກືນກັບ " ເຕົາ " ຢ່າງໃດ ? ເຊັນ ເປັນຄຳໃນພາສາຍີ່ປຸ່ນ ຊຶ່ງກົງກັບພາສາບາລີ ວ່າ "ຊານ" ນິກາຍຊານເນັ້ນໜັກໃນຫລັກວິປັສສນາ ພຣົມເພັ່ງດ້ວຍປັນຍາ

ເຊັນ ກັບ ເຕົາ ຫລືເຕົາກັບເຊັນ ຄູ່ກັນມາໂດຍຕລອດ ປະຣະມາຈານ ແຫ່ງເຕົາຄືທ່ານເຫລົາຈື້ ແປວ່າອາຈານຜູ້ເຖົ້າ ທ່ານເຫລົາຈື້ ເກີດໃນສມັຍພຸທກາລ ໄດ້ຮັບຣາຊການໃນພຣະຣາຊສຳນັກແຫ່ງຣາຊວົງເຈົາ ເປັນເລຂານຸການພຣະຣາຊວັງ ຕໍ່ມາ ເປັນບັນນາຮັກທໍ່ສມຸດແຫ່ງຊາດ

ບຸຣຸດຜູ້ນີ້ໄດ້ເກັບໂຕຢ່າງງຽບໆເປັນເວລາຫລາຍປີ ແລະໄດ້ບັນລຸຊານສະມາບັດຊັ້ນສູງ ຕັດສິນໃຈລາອອກຈາກຕຳແໜ່ງໜ້າທີ່ໃນຣາຊການ ເດີນທາງໄປເຝົ້າພຣະພຸທອົງໃນປະເທດອິນເດັຽ ເພື່ອສແວງຫາ ຊີວິດອະມະຕະທີ່ແທ້ຈິງ

ຄຳພີ ເຕົາເຕັກເກັງ ເປັນບັນທຶກທີ່ເພິ່ນຂຽນໄວ້ກ່ຽວກັບທັມມະລັດທິເຕົາ ທີ່ເພິ່ນໄດ້ບັນລຸເຖິງ ຕາມຄຳຂໍຮ້ອງຂອງນາຍດ່ານ ຮົ້ນກູ່ ຜູ້ມີນາມວ່າ ຫຍິນຊີ ຈາກນັ້ນ ເພິ່ນກໍເດີນທາງຕໍ່ໄປທະເລຊາຍ ໂກບີ ແຖບລຸ່ມນ້ຳເຫລືອງໂດຍລຳພັງໂດດດ່ຽວແລະດຽວດາຍ ແຕ່ເພິ່ນບໍ່ໄດ້ຢ້ານກົວຫຍັງເລີຍເພາະມີທັມມະໃນດວງໃຈ

ເພິ່ນສາມາດຜ່ານພົ້ນອຸປະສັກ ນານາປະການດ້ວຍກຳລັງໃຈອັນສູງສົ່ງ ແລະໄດ້ຟັງພຣະທັມມະເທສນາຈາກພຣະພຸທທະອົງ ໄດ້ບັນລຸທັມໃນພຣະພຸທສາສນາ

ຊາວຈີນຍົກຍ້ອງ ນັບຖືເພິ່ນວ່າເປັນສາສດາໄທ້ສຮ່າງເລົ່າກຸນ ເປັນໃຫຍ່ກວ່າຊຽນທັງຫລາຍ

ການປະຕິບັດທັມຂອງນັກບວດ(ສີຂາວ) ນິກາຍເຕົາ ນັ້ນຄ້າຍກັບນັກບວດ (ສີເຫລືອງ) ນິກາຍເຊັນໃກ້ຄຽງກັນຫລາຍ ຕ່າງກັນອອກໄປທີ່ຣະດັບຂອງທັມເທົ່ານັ້ນ

ເຕົາ ເປັນລັດທິຊານສະມາບັດ ເຊັນ ເປັນລັດທິວິປັສສນາຊານ ຫລັກທັມເຕົາ ມີຈຸດຢືນຢູ່ທີ່ການຝຶກຈິຕຫລັກທັມຂອງເຊັນມີຈຸດຢືນຢູ່ທີ່ການຢຸດ "ສະຕິ"

ເຕົາ ເນັ້ນໜັກໃນເຣື້ອງທັມມະຊາດ "ເຊັນ" ເນັ້ນໜັກໃນເຣື້ອງ ຄວາມວ່າງ ດຳເນີນຊີວິດຢູ່ດ້ວຍຄວາມວ່າງ ວ່າງຈາກຕັນຫາ ແລະອຸປາທານ

ຫລັກທັມຂອງເຕົາ ເປັນນາມທັມ ຣະອຽດເລິກຫລັກທັມຂອງເຊັນ ເປັນນາມທັມ ທີ່ປຣານີດສູງຂຶ້ນອີກຣະດັບນຶ່ງ

ຂຽນມາຕັ້ງຍາວແລ້ວ ຜິດພາດຢ່າງໃດກໍຢ່າໄດ້ຖືສາກັນເລີຍ ຕິເພື່ອກໍ່ຕໍ່ເຕີມເພື່ອສ້າງສັນຈຶ່ງເປັນວິທີທີ່ດີງາມ

(ອ່ານຕໍ່ໜ້າ 13)

# ຊຸມນຸມກາບກອນ ແລະ ສຸພາສິດ

## ກາບປູ່ສອນຫລານ ຕໍ່

ແຕກຈາກທ້ອງ ເປືອກໄຂ່ຕາມການ        ບໍ່ມີນານ ເຕີບໂຕຂຶ້ນໃຫຍ່
ພໍມັນໄຂ່ ມິ້ມທ້ອງອອກມາ        ແມວວິຣາ ຕົວເປັນເມັຽນ້ອຍ
ຄານກ່ອມກ້ອຍ ຄາບໄຂ່ຂົບກິນ        ສົມຖວິນ ຈ່ອງເວນກັນໄວ້
ມັນຮ້ອງໄຫ້ ເສັຽລູກຫົວສາວ        ພໍເຖິງຄາວ ທີສອງໄຂ່ຊ້ຳ
ແມວຄ້ຳມ້ຳ ກິນແທ້ດັ່ງຫລັງ        ອະນິດຈັງ ເວນນຳບໍ່ມົ້ວ
ມາເກືອກກົ້ວ ຕາມໄດ້ດັ່ງຫວັງ        ຕະຕິຍັງ ທີສາມມັນໄຂ່
ແມວລອບໄລ່ ເຕັ້ນຄາບກັດຄໍ        ເຮັດຈອມຈໍ ໄກ່ຕິງບໍ່ໄດ້
ໄກ່ຮ້ອງໄຫ້ ຂໍຜູກກັມເວນ        ມຶງທຳເຂັນລູກກູກິນໄຂ່
ຍັງບໍ່ໃຫຍ່ ສອງເທື່ອພາຍຫລັງ        ຕະຕິຍັງ ກິນກູທັງລູກ
ຂໍຜູກຫມັ້ນ ເວນນີ້ຢ່າຫາຍ        ຄັນກູຕາຍ ເກີດເມືອພາຍຫນ້າ
ຂໍໄດ້ຂ້າ ກິນລູກທັງມຶງ.................
ແມ່ໄກ່ເວນ ເຫມີດຄຳໃຈຂາດ        ກັບຈາກຊາດ ໄປເກີດເປັນເສືອ
ນອນເອືອເລືອ ປ່າໄພດົງກວ້າງ.........
ແມວຢູ່ບ້ານ ກິນໄກ່ສົມໃຈ        ຢູ່ນານໄປ ພໍເຖົ້າເຫມີດຊີ່ວ
ຫລຸດຊີ່ວແລ້ວ ໄປເກີດເປັນກວາງ        ໃນດົງຫລວງ ຮ່ວມເສືອເມັຽເຖົ້າ
ເຫດສອງເຈົ້າ ເວນກັຽວບໍ່ຫາຍ        ກວາງສືບສາຍ ເຕີບໂຕມີລູກ
ເວນເຝົ້າຜູກ ອອກລູກບໍ່ນານ        ເສືອໃຈພານ ຜູ້ເປັນເມັຽເຖົ້າ
ເຮັດເຖົ້າເມົ້າ ເຕັ້ນຄາບລູກກວາງ        ກວາງມີຄື ແລ່ນຫນີຮ້ອງໄຫ້
ກວາງບິ່ນໃບ້ ເສັຽລູກຫົວສາວ        ຄັນເຖິງຄາວ ກວາງມາມີທ້ອງ
ເວນແລ່ນຕ້ອງ ລູກອອກທີຫລັງ        ເສືອຈອບບັງ ຄາບກິນຈົນໄດ້
ກວາງຈົ່ມໃບ້ ເສັຽລູກສອງທົນ        ກວາງເຫລືອທົນ ຄິດເຖິງລູກນ້ອຍ
ນ້ຳຕາຍ້ອຍ ສອງຂ້າງງ່ວມເຫງົາ        ຄຶດບໍ່ເຊົາ ຮ່ຳໄຮເມືອຫນ້າ
ນ້ອຍບໍ່ຊ້າ ມານຊ້ຳທີສາມ        ກວາງແມ່ງາມ ຖ້ວນເດືອນອອກລູກ
ເສືອຕົວຜູ້ ເວນນັ້ນແລ່ນມາ        ເຫັນມີຄາແມ່ພວມມິ້ມທ້ອງ
ເສືອຈອບຈ້ອງ ເຕັ້ນຄາບກັດຄໍ        ເຮັດຈອມຈໍ ກວາງຕິງບໍ່ໄດ້
ກວາງຮ້ອງໄຫ້ ຂໍຜູກເວນກັມ        ມຶງມາທຳ ກິນລູກສອງເທື່ອ
ຊ້ຳເທື່ອນີ້ ກິນລູກທັງກູ        ຄັນກູຕາຍ ເມືອເກີດພາຍຫນ້າ
ຂໍຂ້າໄດ້ ກິນລູກທັງມັນ        ກັມມາທັນ ສິ້ນຄຳໃຈຂາດ
ຕາຍຈາກຊາດໄປເກີດເປັນຜີ        ຍັກຂິນີ ຄືເມັຽແມ່ນ້ອຍ
ຢູ່ປ່າກວ້າງ ໃນເຂດພົງໄພ        ເສືອຈັງໄຮ ກິນກວາງທັງລູກ
ເຫດເຂົາຜູກເວນໄວ້ຕໍ່ກັນ        ເປັນສຳຄັນ ເກີດເມືອພາຍຫນ້າ

ເສືອໃຈກ້າ ຫລຸດຊົ່ວພາຍລຸມ    ເປັນຈົ່ງບຸນ ຖືເອົາກຳເຫນີດ
ມັນໄດ້ເກີດ ໃນທ້ອງແຫ່ງຄົນ    ປະຕິສົນ ຕະກູນບໍ່ຕ່ຳ
ໃນເຂດກ້ຳ ເມືອງສາວັດຖີ    ເປັນຜູ້ດີ ສອນສາວຂົ້ນໃຫຍ່
ມັນຈຶ່ງໄດ້ ຜົວສ້າງແປງເຮືອນ    ກັມມາເຕືອນ ປຸກເຮືອນນອກບ້ານ
ບໍ່ຫນ້າຢ້ານ ເຮືອນເພິ່ນຫລາຍຫລັງ    ກັມມັນຍັງ ກັບເມັຽແມ່ນ້ອຍ
ນາງຫລ້າຊ້ອຍ ມີລູກສິບເດືອນ    ກັມໄປເຕືອນ ຍັກຂີນີມັນຮູ້
ພໍມົ້ມທ້ອງ ນາງຍັກມາເຖິງ    ທຳວາດເຊີງ ດັ່ງມັນເປັນສ່ຽວ
ມັນຂໍຫນ່ຽວ ອຸ້ມຈູບກຸມມານ    ປາກສຽງຫວານ ດັ່ງຄົນເຮົາແທ້
ມັນປິ່ນແປ້ ຍໍຂົ້ນຈິກກິນ    ຍັກທະມິນ ຈິກກິນເດັກນ້ອຍ
ມັນເກີນຖ່ອຍ ກິນແລ້ວແລ່ນຫນີ    ເຫັນເສັຽທີ ຜົວເມັຽຮ້ອງໄຫ້
ປາກບໍ່ໄດ້ເສັຽລູກຊາຍກົກ    ຕົກສົງລົງ ດ່ງຄົນເປັນບ້າ
ຊ້ຳບາດຫນ້າ ອອກລູກທີສອງ    ຍັກຜີປອງຍາດກິນຈົນໄດ້
ແມ່ຮ້ອງໄຫ້ ເສັຽລູກສອງຄົນ    ກັມບັນດົນ ດັ່ງຄົນໄປບອກ
ພໍລູກອອກ ນາງຍັກມາເຖິງ    ເປັນເລີງໆ ດັ່ງດຽວສອງເທື່ອ
ນາງຫລ້າເບື່ອ ມານລູກທີສາມ    ຄົບສິບເດືອນ ຊວນຜົວເຂົ້າບ້ານ
ໄປອອກລູກ ເຮືອນແມ່ໃນເມືອງ    ນາງບຸນເຮືອງ ສັ່ງຄົນເຮືອນໃກ້
ຢູ່ບໍ່ໄດ້ ຢ້ານຍັກມາເຫັນ    ເຄີຍເປັນເຂັນ ຍັກກິນລູກນ້ອຍ
ກັມຂອງຂ້ອຍ ລາແມ່ທັງຫລາຍ    ຈັກຜັນຜາຍ ເຮືອນຫລັງອອກລູກ
ໃຈຍັງຜູກ ເຮືອນຢ້າວຢູ່ໄກ    ຂໍລາໄປ ສົມຄວນຈັກຕ່າວ
ກ່າວທີ່ນັ້ນ ສອງເຈົ້າເຂົ້າເມືອງ    ຕາມຄຳເຄືອງ ແຫ່ງຕົນຈາໄວ້
ອອກລູກໄດ້ ພໍຄົບສອງເດືອນ    ເຫັນສົມຄວນ ເຕືອນຜົວຄືນບ້ານ
ສອງປາກຕ້ານ ເດີນດ່ວນຕາມທາງ    ເວົ້າກັນພາງ ທັງອຸ້ມລູກນ້ອຍ
ຕາເວັນຄ້ອຍ ແດດຮ້ອນເຫລືອທົນ    ອິດມາຈົນເຖິງແຄມສະໃຫຍ່
ຢູ່ຈຶ່ງໃກ້ ວັດສັບພັນຍູ    ນາງບຸນຊູ ໃຫ້ຜົວອຸ້ມລູກ
ນາງຄຶດຖືກ ລົງອາບສີໄຄ    ອາບໄວໆ ຂົ້ນມາບໍ່ຊ້າ
ອຸ້ມລູກຫລ້າ ຢືນຢັ້ງຖ້າຜົວ........
ພຣະຈອມທັມ ສິ່ງເຊົາເມືອບ້ານ    ສອງບໍ່ຄ້ານ ພຽນລັຽງເຊິ່ງກັນ
ເວນນຳທັມ ເຫມີດລົງພຽງນັ້ນ    ເວົ້າສັ້ນໆ ເຫັນຮ່ອມທາງກັມ
ໃຜກະທຳ ຂ້າສັດເປັນບາບ    ຕາຍລະຄາບ ວຽນແທ້ຕອບກັນ
ອັສຈັນ ເປັນເວນບໍ່ແລ້ວ    ພຣະຍອດແກ້ວ ຕັດໃຫ້ຈຶ່ງຫາຍ
ປະຣິຍາຍ ຈົບລົງພຽງນີ້    ເຮົາກ່າວຊີ້ ສອນລູກສອນຫລານ
ຕາມນິທານ ຂ້າສັດໂທດຮ້າຍ    ຄວນຍັກຍ້າຍ ພຽນເວັ້ນຊູ່ຄົນ
ບຸນກຸສົນ ໃຜມັນສ້າງໄວ້    ຫາກຈັກໄດ້ ໄປສູ່ຜູ້ດຽວ ເຈົ້າເອີຍ.

**( ອ່ານຕໍ່ສບັບຫນ້າ )**

# ຂ່າວລັງຄົມ

## ພສົມການເມືອງ

ຈັດໂດຍ ສຸຣາລັຍ

✱ ຄະນະຈັດທຳວາຣະສານ ສັງຄົມລາວ ຂໍສແດງຄວາມເສົ້າສລົດໃຈ ທີ່ທ່ານ ກຣຕ ວົງທອງທິບ ສາມີຂອງຍານາງວາສນາ ວົງທອງທິບ ຊຶ່ງໄດ້ເຖິງແກ່ກັມໄປແລ້ວໃນຄືນວັນພະຫັດທີ ໓໑ ມະກະຣາ ໑໙໙໐ ດ້ວຍຫົວໃຈວາຍ ຣວມອາຍຸໄດ້ ໕໓ ປີ, ທ່ານກຣດ ວົງທອງທິບ ເປັນພົລເມືອງດີຜູ້ນຶ່ງໃນປະຊາຄົມລາວ ເມືອງພອດແລນ ຣັດອໍຣິກອນ ໃນຄາວທີ່ຍັງມີຊີວິດຢູ່ ຜູ້ກ່ຽວໄດ້ສ້າງຄວາມດີມີປະໂຍດແກ່ສັງຄົມຫລາຍສິ່ງຫລາຍປະການ ແລະຍັງໄດ້ເປັນສະປອນເຊີ ຮັບເອົາອົພຍົບລາວ ແລະວຽດນາມເຂົ້າມາຕັ້ງຖິ່ນຖານໃນຣັດອໍຣິກອນຫລາຍຄອບຄົວ ໂດຍບໍ່ຫວັງສິ່ງຕອບແທນໃດໆ...ຄວາມດີທີ່ທ່ານກຣດໄດ້ສ້າງໄວ້ໃນຂະນະທີ່ຍັງມີຊີວິດຢູ່ຈະຖືກຈົດຈຳໄວ້ຕລອດໄປ...ຂໍໃຫ້ດວງວິນຍານຂອງທ່ານກຣດ ຈົ່ງໄປສູ່ສຸຂຕິພົບເຖີດ.......

✱ ທ່ານສາລີ ວົງຄຳຊາວ ຮອງນາຍົກຣັຖມົນຕຣີ ຣັຖມົນຕຣີເສຖກິດ, ແຜນການ ແລະ ການເງິນ ແຫ່ງປະເທດ ສປປລ. ກໍໄດ້ສູນເສັຽຊີວິດໄປແລ້ວໃນວັນທີ ໔໓ ເດືອນມະກະຣາ ໑໙໙໑ ຍ້ອນພຍາດຂອງຜູ້ກ່ຽວ ຣວມອາຍຸໄດ້ ໖໖ ປີ...ນັບວ່າ ສປປລ ໄດ້ສູນເສັຽຄົນສຳຄັນ ທີ່ມີຫົວປຽນແປງ,ມີແນວຄິດປະຕິຮູບເສຖກິດເພື່ອຊັກນຳໃຫ້ຊາວຕ່າງປະເທດ ແລະ ຊາວລາວທີ່ຢູ່ຕ່າງປະເທດໄປລົງທຶນຢູ່ປະເທດລາວ.....✱ ເປັນໜ້າສົງສານ ແລະເປັນຫ່ວງ ອົພຍົບລາວ ທີ່ຍັງຄ້າງຄາຢູ່ປະເທດໄທຍ ເພາະກ່ອນສົງຄາມຈະເກີດຂຶ້ນຢູ່ອ່າວເປີເຊັຽນັ້ນ ຊາວໂລກ ແລະ ສະຫະປະຊາຊາດ ກໍບໍ່ໃຫ້ຄວາມສຳຄັນແກ່ອົພຍົບລາວຢູ່ແລ້ວ ບາດນີ້ເກີດສົງຄາມຂຶ້ນທີ່ອ່າວເປີເຊັຽຈຸດສົນໃຈຂອງສະຫະປະຊາຊາດ ກໍຈະແນໃສ່ອົພຍົບຢູ່ທາງແຖວເປີເຊັຽພຸ້ນໝົດ ດັ່ງນັ້ນຊາວລາວເຮົາທີ່ຢູ່ປະເທດທີສາມຄວນຊອກຫາວິທີທາງ ແກ້ໄຂບັນຫາອົພຍົບລາວທີ່ຍັງຄ້າງຄາຢູ່ເມືອງໄທຍນີ້ໃຫ້ລຸລ່ວງໄປຕາມສົມຄວນ..

✱ ເຊັ່ນດຽວກັບບັນຫາເສຖກິດຢູ່ເມືອງລາວໃນປັດຈຸບັນ ມີນັກລົງທຶນຕ່າງປະເທດໄປຊອກລົງທຶນຢູ່ບ້ານເຮົາຫຼາຍຂຶ້ນທຸກມື້ ທີ່ເຂົາເຈົ້າໄປລົງທຶນຢູ່ບ້ານເຮົານັ້ນ ກໍເພາະວ່າສ່ວນຫລາຍແມ່ນຢາກໄປເອົາຕລາດຢູ່ວຽດນາມແລະຂະເມນພຸ້ນ ເພາະຣັຖບານສະຫະຣັຖບໍ່ອະນຸຍາດໃຫ້ພວກເຂົາໄປລົງທຶນຢູ່ປະເທດເຫລົ່ານັ້ນໄດ້ເທື່ອແຕ່ມື້ໃດຫາກສະຫະຣັຖ ຫາກມີສັມພັນທະໄມຕຣີ ກັບວຽດນາມ ແລະຂະເມນແລ້ວ ຄົງບໍ່ມີໃຜໄປລົງທຶນຢູ່ບ້ານເຮົາອີກ ດັ່ງນັ້ນເວລານີ້ ນ້ຳກຳລັງພວມຂຶ້ນໃຫ້ຟ້າວຕັກ ຣັຖບານຄວນຖືວ່າມີການເສັຽປຽບແດ່ເລັກນ້ອຍ ກໍຄວນ ອະນຸໂລມໃຫ້ເຂົາໄປ ເພາະຈະເຮັດໃຫ້ ຄົນລາວເຮົາມີວຽກເຮັດງານທຳຫລາຍຂຶ້ນ ແລະເສຖກິດຂອງປະເທດກໍຈະດີຂຶ້ນ

✱ ເວົ້າແທ້ໆ ພວກເຮົາຄວນພູມໃຈ ທີ່ບັນພະບຸຣຸດຂອງລາວເຮົາໄດ້ເຄີຍຂັບໄລ່ ພະມ້າ, ໄທຍ, ຝຣັ່ງ,ອະເມຣິກາ ອອກຈາກຜືນແຜ່ນດິນອັນເປັນທີ່ຮັກຂອງເຮົາ ປາກົດວ່າດຽວນີ້ກຳລັງຂັບໄລ່ໂຊວຽດ ແລະວຽດນາມ ອອກຈາກລາວ ແຕ່ສຳຣັບໂຊວຽດ ນີ້ ບໍ່ຈຳເປັນຕ້ອງຂັບໄລ່ຍາກດອກ ເຂົາເຈົ້າໜີເອງ ຕໍ່ໄປ ພວກເຮົາຈະຂັບໄລ່ອຳນາດການປົກຄອງຂອງຕ່າງປະເທດຢູ່ລາວ ໃຫ້ອອກຈາກດິນລາວໃຫ້ໝົດ ແລະລາວຈຶ່ງຈະມີເອກຣາດແທ້ຈິງ.

✱ ທ່ານບົວເພັດ ສີຍາວົງ ອະດີດບັນນາທິການ Lao Press ປັດຈຸບັນ ໄດ້ມາເປັນ ບັນນາທິການໜັງສືພິມ "ລາວສັມພັນ" ແທນທ່ານ ແສງ ຈິດດາໄລ ຊຶ່ງເລື່ອນຂຶ້ນໄປເປັນຜູ້ອຳນວຍການ....ແຕ່ມີຂ່າວມາວ່າ ທ່ານບົວເພັດ ສີຍາວົງ ກຳລັງຈະຈັດທຳໜັງສືພິມໃໝ່ມີຊື່ວ່າ "ຄວາມຫວັງໃໝ່" ວ່າຊັ້ນ ອັນນີ້ກໍຂໍສນັບສນູນ ຂ້ານ້ອຍ

* ຫລາຍຄົນ ໄດ້ອ່ານ ນສພ ຫລືເອກກະສານຕ່າງໆ ທີ່ໄດ້ເວົ້າເຖິງເມືອງລາວ ວ່າເປັນປະເທດທີ່ທຸກຍາກທີ່ສຸດໃນໂລກ ບາງຄົນອ່ານແລ້ວກໍແຄ້ນໃຈ ບາງຄົນກໍຫລັ່ງນ້ຳຕາກໍມີ....ແຕ່ຜູ້ຂຽນຄຶດວ່າ ລາວ ມີຄວາມຫວັງຫລາຍຢູ່ ລາວເຮົາທຸກ ສ່ວນຫລາຍແລ້ວແມ່ນຍ້ອນຣະບົບການປົກຄອງຂອງລາວ ຄືໃນສມັຍເກົ່າກໍຍ້ອນຣະບົບ ສັກດີນາ ແລະໃນສມັຍໃຫມ່ ກໍຍ້ອນຣະບົບ ສັງຄົມນິຍົມ..ຂໍໃຫ້ທັສນະປຽບທຽບດ້ານເສຖກິດ ຣະຫວ່າງລາວ ແລະໄທຍ..ລາວມີຫນ້າດິນ ໒໕໐,໐໐໐ ກິໂລແມດກາເຣ ໄທຍມີຫນ້າດິນ ໕໐໐,໐໐໐ ແມຕກາເຣ ສແດງວ່າໄທຍມີຫນ້າດິນ ສອງຕໍ່ຂອງລາວ ແຕ່ລາວມີປະຊາກອນ ໔ ລ້ານຄົນ ໄທຍມີ ໕໕ ລ້ານຄົນ ສແດງວ່າໄທຍມີປະຊາກອນຫລາຍກວ່າລາວ ໑໔ ຕໍ່...ບາດມາໄລ່ສເລັ່ຽເປັນຈັກຄົນ ຕໍ່ກິໂລແມດນຶ່ງແລ້ວ ສແດງວ່າລາວມີ ໑໖ ຄົນຕໍ່ກິໂລແມດນຶ່ງ ແຕ່ສຳຣັບໄທຍແລ້ວຕົກເປັນ ໑໑໐ ຄົນຕໍ່ນຶ່ງກິໂລແມດກາເຣ ນອກຈາກນີ້ ເນື້ອດິນຂອງລາວທີ່ເອົາມາໃຊ້ປູກຝັງພຽງແຕ່ ໑໐% ທີ່ນັ້ນ ທີ່ເຫລືອ ໙໐% ແມ່ນປ່າໄມ້ທັງນັ້ນ ສ່ວນໄທຍ ໗໐% ແມ່ນດິນທີ່ໃຊ້ເປັນປໂຍດແລ້ວ ສ່ວນອີກ ໓໐ % ຍັງເປັນປ່າໄມ້ຢູ່...ບໍ່ແຮ່ຂອງລາວ ສ່ວນຫລາຍຍັງບໍ່ຖືກຄົ້ນຄວ້ານຳມາໃຊ້ ແຕ່ສຳຫລັບໄທຍ ສ່ວນຫລາຍຖືກຄົ້ນຄວ້າແລະນຳມາໃຊ້ເປັນສ່ວນໃຫຍ່ແລ້ວ ນີ້ຄືເຫດຜົນທີ່ລາວມີຣາຍໄດ້ຕໍ່ຫົວພຽງແຕ່ $໒໐໐ ດອລລາຕໍ່ປີແຕ່ໄທຍສເລັ່ຽຣາຍໄດ້ $໑,໐໐໐ ດອລລາຕໍ່ຫົວຄົນຕໍ່ປີ...

ແຕ່ລາວເຮົາມີຄວາມຫວັງຫລາຍໃນອະນາຄົດ ແຕ່ຖ້າພວກເຮົາ ແລະ ຣັຖບານ ຍັງນັ່ງເສີຍ ຄຶດວ່າຕົນມີດິນດອນຕ່ອນຫຍ້າອຸດົມສົມບູນຫລາຍແລ້ວບໍ່ເຮັດຫຍັງ ລາວກໍຍັງຈະທຸກອີກຕໍ່ໆໄປຕລອດການ ແຕ່ຖ້າຣັຖບານເຂົ້າໃຈເອົາ Management ແລະ Technology ຂອງຕ່າງປະເທດ ໂດຍສເພາະຈາກປະເທດຕາເວັນຕົກ ນຳໄປໃຊ້ຢູ່ລາວແລ້ວ ຄຶດວ່າລາວເຮົາຈະໄປໄກພໍແລ້ວຢູ່..

* ໂດຍການນຳພາຂອງທ່ານສອນເພັດ ວັນນະຣັດ ສະມາຄົມລາວ ວໍຊິງຕັນ ໄດ້ມີການປັບປຸງດີຂຶ້ນໂດຍສເພາະການສວັດດີການ ແລະບໍຣິການຊ່ອຍ ພໍ່ ແມ່ ພີ່ປ້ານ້າອາ ປາກົດວ່າ ໃນຄະນະບໍຣິຫານຂອງທ່ານ ມີຜູ້ຊ່ວຍທີ່ ເຂັ້ມແຂງ ຄືທ່ານບຸນທິນທ້າວ ແລະ ທ່ານໃບພອນ ສິງຫາວົງ ເອົາວຽກມາເຮັດຢູ່ບ້ານຢູ່ເລີຍໆ...ແຕ່ກໍມີຫລາຍຄົນຈົ່ມວ່າ ພວກເພິ່ນເຮັດນຳແຕ່ຣັຖ Maryland ສ່ວນ Virginia ແລະ DC ບໍ່ເຫັນມີການເຫນັງຕີງຫຍັງ ຂໍໃຫ້ເບິ່ງນຳແດ່ ຢູ່ໃສກໍແມ່ນສະມາຊິກຄືກັນນໍ່າລະ.....*

ຄວາມຄິດອັນດີເລີດຂອງທ່ານຄຳຈິງ ຫລວງປຣະເສີດ ກໍກຳລັງຖືກປະຕິບັດ ທ່ານຜູ້ອ່ານອາດຈື່ໄດ້ໃນຫລາຍເດືອນຜ່ານມາ ສຄລ ໄດ້ອອກໃນຂ່າວສັງຄົມວ່າ ທ່ານຄຳຈິງມີຫົວຄິດດີໃນການພັທນາການທ່ອງທ່ຽວໃນລາວ ຄືເຮັດ Motels ຢູ່ຕາມເສັ້ນທາງໂຮຈິມິນ ເພາະນັກທ່ອງທ່ຽວທັງຫລາຍເບື່ອໄປທ່ອງທ່ຽວທະເລ ຫລືເມືອງໃຫຍ່ເພາະມັນຄືເກົ່າ ເຂົາເຈົ້າຢາກເຫັນສິ່ງແປກໆ..ໂຄງການອັນນີ້ທ່ານ Claude Vincent ເຈົ້າຂອງ Transpack ແລະຮ້ານອາຫານ "ສຸຣິຍາ" ຖນົນປາງຄຳ ຂ້າງກົມໂຄສະນາການ ໄດ້ເອົາມາປະຕິບັດແລ້ວ ຄືເພິ່ນໄດ້ສ້າງ Motels ເປັນຣະຍະໆແຕ່ເມືອງສາຣະວັນ ເຖິງ ຊຳເຫນືອ ຕາມເສັ້ນທາງ ໂຮຈິມິນ ໃນ Tour package ນີ້ປະກອບດ້ວຍ ຂີ່ຣົດ JEEP ຢູ່ເມືອງສາຣະວັນ ເຖິງເມືອງຊຳເຫນືອ ວຽງໄຊ ນອນພັກເປັນຣະຍະໆ ກິນອາຫານທ້ອງຖິ່ນ ແຕ່ລະ Motels ມີ Bar ເຕັ້ນລຳ ມີຊາວບ້ານມາສແດງສິລປະໃຫ້ເບິ່ງ ໃຫ້ຊີມອີກ...ຟັງເບິ່ງແລ້ວສິຄັກໆຢູ່ເດລະ.....*ເວົ້າແຕ່ເຣື່ອງອື່ນໆ ທັນມາເວົ້າເຣື່ອງເກັບເງິນຄ່າອຸ້ມຊູ "ສັງຄົມລາວ"ແດ່ຫນ້ອຍນຶ່ງ ຄືວ່າມີສະມາຊິກປະມານ ໑໐໐ ຄົນທີ່ບໍ່ຈ່າຍ ຊຶ່ງທາງເຮົາໄດ້ໃຫ້ອ່ານໄປ ໓-໔ ເດືອນແລ້ວ ດັ່ງນັ້ນທາງເຮົາຈະງົດສົ່ງເລີ້ມແຕ່ສບັບນີ້ເປັນຕົ້ນໄປ....ສ່ວນສະມາຊິກທີ່ຈົ່ມວ່າບໍ່ໄດ້ຮັບມາສອງ-ສາມເດືອນແລ້ວນັ້ນ ກໍເພາະວ່າທ່ານໄດ້ຍ້າຍທີ່ຢູ່ໃຫມ່ ແຕ່ບໍ່ຂຽນມາບອກທາງ ສຄລ ເຮົາຈະໄປຮູ້ໄດ້ຢ່າງໃດ ແລະທາງໄປສະນີເຂົາຈະບໍ່ສົ່ງຕໍ່ໃຫ້ທ່ານ ດັ່ງນັ້ນ ຂໍປະກາດວ່າ ຖ້າທ່ານປ່ຽນທີ່ຢູ່ ກໍແຈ້ງໃຫ້ເຮົາຮູ້ດ້ວຍ.

* ມີຈົດຫມາຍຫລາຍສບັບຂຽນມາ ບ.ກ ວ່າຂໍໂຈະໄວ້ສາກ່ອນ ເພາະຫນ້າເຈ້ຍມັນເຕັມຫມົດແລ້ວ ເອົາໄວ້ໂອກາດຫນ້າ ຈະຕອບໃຫ້ ຫວັງວ່າ ຄົງລໍຖ້າ ແລະໃຫ້ອະພັຍ...

# ເພງລາວ 24 TRACK

## ຊຽງຂວາງແຫ່ງຄວາມຫລັງ

| | |
|---|---|
| ເນື້ອຮ້ອງ-ທຳນອງ | ຈັງຫວະ ສໂລວ໌ |
| ພິມມາ ສິມສຸທິ | ຮ້ອງໂດຍ ພິມມາ ສິມສຸທິ |

໑. ຄັ້ງນຶ່ງເຄີຍມາ ເພິ່ງພາຍັງຖິ່ນ
ຊຽງຂວາງ ວຽງທອງທານິນ ຖິ່ນອັນສວຍງາມທຽມລ້າ
ແຕ່ມາບັດນີ້ ຕ້ອງຈຳພາກໄປໄກຕາ
ຄິງຄິດເຖິງດວງໜ້າ ບໍ່ເລືອນລາຈາກໃຈ

໒. ພາບແຫ່ງຄວາມຫລັງ ຍຶດຝັງໃຈໝັ້ນ
ທີ່ຂີວທິວຊຽງສາຍັນ ແອບຂວັນນ້ອງນາງຄຽງໃກ້
ສຸກໃຈຍິ່ງລ້ຳ ອອດຄຳຫວານຊຶ້ງຕຶງໃຈ
ລິມເຢັນພັດມາຄາວໃດ ກອດນ້ອງໄວ້ໃຫ້ອຸ່ນນິດທຣາ

(ທ່ອນແຍກ) ຊຽງຂວາງ ເຈົ້າຍັງຄຶງເຕືອນໃຈນີ້
ເຂົາໂຂດຫ້ວຍທານວາຣີ ອາບເດັ່ນສີສວຍງາມໃນຕາ
ເຫັນໄຜ່ລູ່ໂອນ ຍອດສິນຕ້ອງລິມຍິ່ງຊ້ຳໜັກໜາ
ດັ່ງສ້ຽນໜາມທິ່ມແທງອຸຣາ ຈຳຈາກລາດັ່ງສາຍນະທີ

໓. ຕ້ອງຈາກໄປແລ້ວ ແກ້ວເອີຍລາກ່ອນ
ຍັງຝັງຮັກໃນບັງອອນ ຈຳຈອນເພາະກັມຫລີ້
ຫາກບຸນສ້າງສິມ ເຄີຍທຳຮ່ວມບາຣະມີ
ຄິງຄືນຄອບຄອງເທວີ ເປັນສີແມ່ເຮືອນຂອງຮຽມ.%








ຮັບເຮັດ ເຂົ້າເດືອນ

ລົດຣາຄາ 10%

ສຳຣັບງານກິນລ້ຽງຕ່າງໆ
ຣາຄາ ເປັນກັນເອງ
ພິເສດສເມີສຳຣັບຄົນລາວ

ห้องอาหาร.

# เชียงใหม่

ວັນທຳມະດາ
ເປີດ ອາຫານທ່ຽງ
11 ເຖິງ 2:30 ໂມງ

ອາຫານຄ່ຳ ເປີດ
5 ເຖິງ 9 ໂມງແລງ

# CHIANG MAI
## RESTAURANT
### THAI & CHINESE CUISINE

ວັນ ເສົາ ວັນອາທິດ
ເປີດ 11 ໂມງເຊົ້າ
ເຖິງ 9 ໂມງແລງ

ປິດ
ວັນພຸດ

TEL. (503) 232-8608

4604 SE. HAWTHORNE BLVD.
PORTLAND, OREGON 97215

SANGKHOMLAO
5090 NW. 173rd Place
Portland, OR. 97229

BULK RATE
US POSTAGE
PAID
PORTLAND,OR.
PERMIT NO. 1152


WANTED

THE VOICE OF AMERICA SEEKS CANDIDATES WITH FLUENCY IN LAO AND ENGLISH TO WORK IN WASHINGTON, D.C. AS LAO LANGUAGE BROADCASTERS. POSITIONS REQUIRE TRANSLATION (ENGLISH TO LAO) AND VOICE TESTS. STARTING SALARY RANGES FROM $25,717 TO $31,116 PER YEAR. SUBMIT DETAILED RESUME IN ENGLISH OR STANDARD GOVERNMENT APPLICATION FORM, SF-171, TO:

VOICE OF AMERICA
330 INDEPENDENCE AVENUE, SW
ROOM 1543 ATTN: JANET HASPERT
WASHINGTON, D.C. 20547
(202) 619-2119

THE VOICE OF AMERICA IS AN EQUAL OPPORTUNITY EMPLOYER AND IS PART OF THE U.S. INFORMATION AGENCY